ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ລັດຖະບານ** ເລກທີ 238 /ລບ

ນະຄອນຫຼວງວຽງຈັນ, ວັນທີ 11 ສິງຫາ 2017

# ດຳລັດ
# ວ່າດ້ວຍສະມາຄົມ

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ (ສະບັບປັບປຸງ 2015) ສະບັບເລກທີ 63/ສພຊ, ລົງວັນທີ 08 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ (ສະບັບປັບປຸງ 2016) ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 207/ພນ, ລົງວັນທີ 04 ສິງຫາ 2017.

**ລັດຖະບານອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງສະມາຄົມ ເພື່ອເປັນບ່ອນອີງພື້ນຖານ ໃຫ້ແກ່ການສ້າງຕັ້ງສະມາຄົມ ຂອງພົນລະເມືອງລາວ, ອີງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຊຸກຍູ້ໃຫ້ສະມາຄົມ ມີການເຄື່ອນໄຫວ ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ, ປະກອບສ່ວນສົ່ງເສີມຄວາມສາມັກຄີເປັນປຶກແຜ່ນຂອງຊາດ, ລຶບລ້າງຄວາມທຸກຍາກຂອງປະຊາຊົນ, ຊ່ວຍເຫຼືອສັງຄົມ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງປະເທດ.

**ມາດຕາ 2 ສະມາຄົມ**

1. ສະມາຄົມ ທີ່ໄດ້ຮັບການສ້າງຕັ້ງ ແລະ ເຄື່ອນໄຫວຕາມດຳລັດສະບັບນີ້ ແມ່ນການຈັດຕັ້ງສັງຄົມທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຄົມ, ສະມາຊິກສະມາຄົມ ຫຼື ຊຸມຊົນ, ປະກອບສ່ວນພັດທະນາເສດຖະກິດ-ສັງຄົມ ຂອງປະເທດ;
2. ສະມາຄົມ ມີຊື່ເອີ້ນຕ່າງກັນຄື: ສະຫະສະມາຄົມ, ສະຫະພັນ, ສະໂມສອນ ຫຼື ຊື່ເອີ້ນອື່ນ ຕໍ່ໄປນີ້ເອີ້ນລວມວ່າສະມາຄົມ ຊຶ່ງແມ່ນການຈັດຕັ້ງສັງຄົມທີ່ມີສະມາຊິກ. (ຍົກເວັ້ນກຸ່ມຜະລິດທຸລະກິດທີ່ສະແຫວງຫາຜົນກຳໄລ).

**ມາດຕາ 3 ການອະທິບາຍສັບ**

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ບໍ່ຫວັງຜົນກໍາໄລ** ໝາຍເຖິງ ຊັບສິນ, ລາຍຮັບ ທີ່ໄດ້ມາຈາກການເຄື່ອນໄຫວຂອງສະມາຄົມ ພາຍຫຼັງຫັກຄ່າໃຊ້ຈ່າຍບໍລິຫານອອກແລ້ວ ສ່ວນທີ່ເຫຼືອບໍ່ໄດ້ນໍາມາແບ່ງປັນກັນ, ແຕ່ນໍາໄປໃຊ້ຈ່າຍຕາມຈຸດປະສົງທີ່ກໍານົດຢູ່ໃນກົດລະບຽບຂອງສະມາຄົມ;

2. **ສະຫະສະມາຄົມ ຫຼື ສະຫະພັນ** ໝາຍເຖິງ ການເຕົ້າໂຮມກັນຂອງບັນດາການຈັດຕັ້ງສັງຄົມ ທີ່ມີສະມາຊິກ, ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການແລ້ວ ແລະ ເຄື່ອນໄຫວ ຢູ່ໃນຂົງເຂດ ຫຼື ຂະແໜງການດຽວກັນ, ມີຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມນໍາກັນ ເພື່ອສະເໜີອົງການຈັດຕັ້ງຂອງລັດ ທີ່ກ່ຽວຂ້ອງສ້າງຕັ້ງຂຶ້ນ;

3. **ສະໂມສອນ** ໝາຍເຖິງ ການຈັດຕັ້ງສັງຄົມ ທີ່ເຕົ້າໂຮມກັນ ຂອງບັນດາສະມາຊິກ ທີ່ເປັນບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນທາງການແລ້ວ, ມີວິຊາຊີບ ຫຼື ມີການເຄື່ອນໄຫວຢູ່ໃນຂົງເຂດ, ຂະແໜງການດຽວກັນ ມີຄວາມສະໝັກໃຈ ແລະ ເຫັນດີເຫັນພ້ອມນໍາກັນ ເພື່ອສະເໜີອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງສ້າງຕັ້ງຂຶ້ນ;

4. **ຊຸມຊົນ** ໝາຍເຖິງ ທັງໝົດທຸກຄົນພົນລະເມືອງ ທີ່ດໍາລົງຊີວິດຢູ່ໃນພື້ນທີ່ໃດໜຶ່ງທີ່ແນ່ນອນ ມີຈຸດພິເສດຄ້າຍຄືກັນ ແລະ ຜູກພັນ, ເພິ່ງພາອາໄສຊຶ່ງກັນ ແລະ ກັນ;

5. **ຕື່ນຕົວສະໝັກໃຈ** ໝາຍເຖິງ ການເຂົ້າຮ່ວມການຈັດຕັ້ງສັງຄົມໃດໜຶ່ງ ລ້ວນແຕ່ຂຶ້ນກັບເຈດຈໍານົງ, ຄວາມມຸ່ງມາດປາດຖະໜາຂອງແຕ່ລະຄົນ ປາສະຈາກການບັງຄັບໃດໆ;

6. **ສະມາຄົມທີ່ມີຖານະນິຕິບຸກຄົນ** ໝາຍເຖິງ ສະມາຄົມທີ່ໄດ້ຮັບການສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວເປັນປະຈໍາ, ມີກົດລະບຽບ, ມີສໍານັກງານ, ມີຕາປະທັບ ແລະ ມີບັນຊີເງິນຝາກຢູ່ທະນາຄານ ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຂອງລັດ;

7. **ສະມາຄົມທີ່ບໍ່ມີຖານະນິຕິບຸກຄົນ** ໝາຍເຖິງ ສະມາຄົມທີ່ສ້າງຕັ້ງຂຶ້ນ ດ້ວຍຄວາມຕື່ນຕົວສະໝັກໃຈ ຂອງບຸກຄົນ ຫຼື ການຈັດຕັ້ງທີ່ມີເງື່ອນໄຂບໍ່ຄົບຖ້ວນ ຕາມທີ່ກໍານົດໄວ້ໃນມາດຕາ 7 ຂອງດາລັດສະບັບນີ້;

8. **ທຶນ** ໝາຍເຖິງ ເງິນ ຫຼື ຊັບສິນ;

9. **ຊັບສິນ** ໝາຍເຖິງ ຕຶກ, ອາຄານ, ທີ່ດິນ, ພາຫະນະ, ອຸປະກອນຮັບໃຊ້ ແລະ ວັດຖຸທີ່ໄດ້ມາຈາກການຊື້, ການບໍລິຈາກ ແລະ ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ຫຼື ລັດມອບໃຫ້;

10. **ການບໍລິຈາກທຶນ** ໝາຍເຖິງ ການເສຍສະຫຼະ, ການມອບໂອນເງິນ ຫຼື ຊັບສິນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທີ່ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການຂອງລັດ ໃຫ້ແກ່ສະມາຄົມ;

11. **ການລະດົມທຶນ** ໝາຍເຖິງ ການຈັດກອງປະຊຸມ ຫຼື ງານຕ່າງໆສະເພາະ ຫຼື ແຈ້ງການ ຫຼື ຈົດໝາຍ ເພື່ອຮຽກຮ້ອງໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງໃຫ້ມາບໍລິຈາກ, ສະໜັບສະໜູນ ເງິນ ຫຼື ຊັບສິນໃຫ້ແກ່ສະມາຄົມ;

12. **ອົງການກວດສອບເອກະລາດ** ໝາຍເຖິງ ອົງການກວດສອບພາຍນອກ ທີ່ດໍາເນີນໂດຍ ວິສາຫະກິດກວດສອບ ຫຼື ນັກກວດສອບອິດສະຫຼະ ທີ່ໄດ້ຈົດທະບຽນດໍາເນີນການກວດສອບເອກະລາດ ແລະ ຂຶ້ນທະບຽນວິສາຫະກິດຢ່າງຖືກຕ້ອງ ຕາມກົດໝາຍຂອງ ສປປ ລາວ;

13. **ໃບທະບຽນສະມາຄົມ** ໝາຍເຖິງ ເອກະສານ ຢັ້ງຢືນ, ຮັບຮອງການສ້າງຕັ້ງສະມາຄົມ ທີ່ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ອະນຸມັດສ້າງຕັ້ງຢ່າງຖືກຕ້ອງ ຕາມດໍາລັດສະບັບນີ້.

**ມາດຕາ 4 ນະໂຍບາຍຂອງລັດຕໍ່ສະມາຄົມ**

ລັດ ມີນະໂຍບາຍຕໍ່ສະມາຄົມ ດັ່ງນີ້:

1. ລັດອະນຸມັດໃຫ້ສ້າງຕັ້ງສະມາຄົມເປັນທາງການ ແລະ ມີແຕ່ອົງການຈັດຕັ້ງລັດເທົ່ານັ້ນ ມີສິດອະນຸມັດສ້າງຕັ້ງສະມາຄົມ;

2. ຊຸກຍູ້ສົ່ງເສີມໃຫ້ສະມາຄົມ ເຮັດການບໍລິການສາທາລະນະ, ຊ່ວຍເຫຼືອສັງຄົມ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ດ້ວຍຄວາມບໍລິສຸດໃຈ;

3. ອະນຸມັດໃຫ້ຂົນຂວາຍ ແລະ ຮັບເອົາການບໍລິຈາກທຶນ, ຊັບສິນຕ່າງໆຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ທີ່ຖືກຕ້ອງ ຕາມກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;

4. ອະນຸມັດໃຫ້ມີການພົວພັນ, ຮ່ວມມືກັບບັນດາອົງການຈັດຕັ້ງສາກົນ ເພື່ອປະຕິບັດແຜນງານ, ໂຄງການສະໜັບສະໜູນຊ່ວຍເຫຼືອດ້ານຕ່າງໆ ທີ່ຖືກຕ້ອງ ຕາມກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;

5. ໃຫ້ຄຳແນະນຳ ແລະ ການຊ່ວຍເຫຼືອ ໂດຍຜ່ານ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອໃຫ້ສະມາຄົມ ມີການເຄື່ອນໄຫວຢ່າງມີປະສິດທິຜົນ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ;

6. ອອກນິຕິກຳຕ່າງໆ ເພື່ອໃຫ້ສະມາຄົມ ມີບ່ອນອີງໃນການເຄື່ອນໄຫວຢ່າງຖືກຕ້ອງ.

**ມາດຕາ 5 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ ນຳໃຊ້ສະເພາະສະມາຄົມ ທີ່ມີຖານະນິຕິບຸກຄົນຂອງພົນລະເມືອງລາວ ທີ່ໄດ້ຮັບອະນຸມັດສ້າງຕັ້ງຂຶ້ນ ຕາມດຳລັດສະບັບນີ້.

**ມາດຕາ 6 ຫຼັກການສ້າງຕັ້ງ ແລະເຄື່ອນໄຫວຂອງສະມາຄົມ**

ສະມາຄົມ ສ້າງຕັ້ງຂຶ້ນ ແລະ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ຕົນຕົວສະໝັກໃຈສ້າງຕັ້ງ, ປະກອບທຶນ, ເຂົ້າຮ່ວມເຄື່ອນໄຫວ ຫຼື ອອກຈາກສະມາຄົມ ໂດຍບໍ່ມີຜູ້ໃດຈຳກັດ ຫຼື ບັງຄັບ;
2. ມີຈຸດປະສົງ ແລະ ເປົ້າໝາຍຊັດເຈນ;
3. ເຄື່ອນໄຫວເປັນປະຈຳ;
4. ຄຸ້ມຄອງ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍ ທຸກການເຄື່ອນໄຫວຂອງຕົນ;
5. ກຸ້ມຕົນເອງທາງດ້ານການເງິນ;
6. ເຄື່ອນໄຫວບໍ່ຫວັງຫາຜົນກຳໄລ;
7. ໂປ່ງໃສ, ເປີດເຜີຍ ແລະ ມີຄວາມສະເໝີພາບ.

**ມາດຕາ 7 ເງື່ອນໄຂການສ້າງຕັ້ງສະມາຄົມ**

ການສ້າງຕັ້ງສະມາຄົມ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງລຸ່ມນີ້:

1. ມີຈຸດປະສົງ, ກຳນົດຂົງເຂດການເຄື່ອນໄຫວທີ່ຈະແຈ້ງ, ບໍ່ຂັດກັບ ລັດຖະທຳມະນູນ, ກົດໝາຍ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ, ບໍ່ເປັນໄພອັນຕະລາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິດເສລີພາບຂອງບຸກຄົນອື່ນ;

2. ມີຄະນະຂົນຂວາຍສ້າງຕັ້ງສະມາຄົມ ຢ່າງໜ້ອຍສາມຄົນ ໂດຍແມ່ນຜູ້ລິເລີ່ມສ້າງຕັ້ງສະມາຄົມເປັນຜູ້ບົ່ງຕົວຊື່ຢ່າງໜ້ອຍໜຶ່ງໃນສາມຂອງຄະນະຂົນຂວາຍ ຕ້ອງມີໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການເຮັດວຽກ ທີ່ກ່ຽວຂ້ອງກັບຈຸດປະສົງເຄື່ອນໄຫວຂອງສະມາຄົມ;

3. ຜູ້ລິເລີ່ມ, ຄະນະຜູ້ລິເລີ່ມ, ຄະນະຂົນຂວາຍສ້າງຕັ້ງ, ຄະນະບໍລິຫານ, ຄະນະກວດກາ ແລະ ຜູ້ອໍານວຍການ ຕ້ອງແມ່ນພົນລະເມືອງລາວ, ມີອາຍຸແຕ່ ສິບແປດ ປີຂຶ້ນໄປ ແລະ ມີປະຫວັດຈະແຈ້ງ;

4. ຊື່ຂອງສະມາຄົມ ທີ່ຈະສ້າງຕັ້ງຂຶ້ນ ບໍ່ຊໍ້າຊ້ອນກັບຊື່ຂອງສະມາຄົມອື່ນ ທີ່ໄດ້ຮັບອະນຸມັດໃຫ້ສ້າງຕັ້ງຂຶ້ນຢ່າງຖືກຕ້ອງກ່ອນແລ້ວໃນທ້ອງຖິ່ນດຽວກັນ, ຕ້ອງເປັນພາສາລາວ, ຈະແຈ້ງ, ເຂົ້າໃຈງ່າຍ, ບໍ່ມີລັກສະນະຫຍາບຄາຍ, ຖ້າມີຄວາມຈໍາເປັນແປເປັນພາສາຕ່າງປະເທດ ກໍໄດ້;

5. ມີສໍານັກງານບ່ອນເຮັດວຽກຂອງສະມາຄົມຕັ້ງຢູ່ ສປປ ລາວ ໂດຍມີການຢັ້ງຢືນຈາກອົງການປົກຄອງບ້ານບ່ອນທີ່ສໍານັກງານສະມາຄົມຕັ້ງຢູ່, ມີໜັງສືຢັ້ງຢືນກໍາມະສິດ ຫຼື ສັນຍາເຊົ່າ ທີ່ຖືກຕ້ອງຕາມກົດໝາຍ;

6. ມີກົດລະບຽບຂອງສະມາຄົມ ຕາມແບບຟອມທາງລັດຖະການກໍານົດ;

7. ມີຈໍານວນສະມາຊິກ ທີ່ໄດ້ລົງທະບຽນສະໝັກໃຈເຂົ້າຮ່ວມເຄື່ອນໄຫວໃນສະມາຄົມຢ່າງຄົບຖ້ວນຕາມກໍານົດ ຄື:

7.1 ສະມາຄົມທີ່ເຄື່ອນໄຫວ ໃນລະດັບທົ່ວປະເທດ ຕ້ອງມີສະມາຊິກຢ່າງໜ້ອຍ ຊາວຫ້າຄົນ ຂຶ້ນໄປ;

7.2 ສະມາຄົມທີ່ເຄື່ອນໄຫວ ໃນລະດັບ ພາຍໃນແຂວງ, ນະຄອນຫຼວງ ຕ້ອງມີສະມາຊິກຢ່າງໜ້ອຍ ສິບຫ້າຄົນຂຶ້ນໄປ;

7.3 ສະມາຄົມທີ່ເຄື່ອນໄຫວໃນລະດັບ ພາຍໃນເມືອງ, ເທດສະບານ, ນະຄອນ, ບ້ານ ຕ້ອງມີສະມາຊິກຢ່າງໜ້ອຍ ສິບຄົນຂຶ້ນໄປ.

ສໍາລັບສະມາຄົມເສດຖະກິດ ຫຼື ສະມາຄົມທີ່ເຄື່ອນໄຫວ ໃນຂົງເຂດ, ຂະແໜງການ, ອາຊີບ ຫຼື ທ້ອງຖິ່ນ ທີ່ມີລັກສະນະພິເສດ ຈໍານວນສະມາຊິກ ໃຫ້ພິຈາລະນາເປັນແຕ່ລະກໍລະນີ.

## ໝວດທີ 2

## ປະເພດ ແລະ ລະດັບການເຄື່ອນໄຫວຂອງສະມາຄົມ

### ມາດຕາ 8 ປະເພດສະມາຄົມ

ສະມາຄົມ ຢູ່ ສປປ ລາວ ມີ 3 ປະເພດ ດັ່ງນີ້:

1. ສະມາຄົມ ເສດຖະກິດ;
2. ສະມາຄົມ ວິຊາຊີບ, ເຕັກນິກ-ວິຊາການ ແລະ ປະດິດຄິດແຕ່ງ;
3. ສະມາຄົມ ສັງຄົມສົງເຄາະ ແລະ ພັດທະນາສັງຄົມ.

### ມາດຕາ 9 ສະມາຄົມເສດຖະກິດ

ສະມາຄົມເສດຖະກິດ ແມ່ນການຈັດຕັ້ງສັງຄົມ ຊຶ່ງສະມາຊິກສະມາຄົມ ແມ່ນຫົວໜ່ວຍທຸລະກິດ ທີ່ໄດ້ຮັບການຈົດທະບຽນດໍາເນີນທຸລະກິດ ການຜະລິດ, ການຄ້າ ແລະ ການບໍລິການ ຢ່າງຖືກຕ້ອງ ຕາມກົດໝາຍ ແລະ ບຸກຄົນພົນລະເມືອງ ທີ່ຕື່ນຕົວສະໝັກໃຈສ້າງຕັ້ງຂຶ້ນ ຕາມກົດໝາຍກໍານົດ.

### ມາດຕາ 10 ສະມາຄົມວິຊາຊີບ, ເຕັກນິກ-ວິຊາການ ແລະ ປະດິດຄິດແຕ່ງ

ສະມາຄົມວິຊາຊີບ, ເຕັກນິກ-ວິຊາການ ແລະ ປະດິດຄິດແຕ່ງ ແມ່ນການຈັດຕັ້ງສັງຄົມ ຊຶ່ງສະມາຊິກສະມາຄົມ ແມ່ນຜູ້ມີວິຊາຊີບ, ເຕັກນິກ-ວິຊາການ ໃດໜຶ່ງທີ່ແນ່ນອນ ທີ່ມີຄວາມສະໝັກໃຈເຕົ້າໂຮມກັນ ເພື່ອເຄື່ອນໄຫວສົ່ງເສີມການປະກອບອາຊີບ, ເຕັກນິກ-ວິຊາການ ແລະ ຫົວຄິດປະດິດຄິດແຕ່ງ.

**ມາດຕາ 11 ສະມາຄົມສັງຄົມສົງເຄາະ ແລະ ພັດທະນາສັງຄົມ**

ສະມາຄົມສັງຄົມສົງເຄາະ ແລະ ພັດທະນາສັງຄົມ ແມ່ນການຈັດຕັ້ງສັງຄົມ ຊຶ່ງສະມາຊິກສະມາຄົມ ແມ່ນຜູ້ທີ່ ມີຄວາມສະໝັກໃຈ, ມີນ້ຳໃຈມະນຸດສະທຳ ແລະ ເສຍສະຫຼະສູງສົ່ງ ໃນການປະກອບສ່ວນ ທຶນ, ວັດຖຸ, ສະຕິປັນຍາ, ເຫື່ອແຮງ ເພື່ອຊ່ວຍເຫຼືອ ແລະ ພັດທະນາສັງຄົມ, ຊຸມຊົນ, ຜູ້ທຸກຍາກ, ຜູ້ດ້ອຍໂອກາດ, ຜູ້ພິການ, ຜູ້ອາຍຸສູງ, ຜູ້ຖືກເຄາະຮ້າຍ ຈາກໄພທຳມະຊາດ ຫຼື ສົງຄາມ ໂດຍບໍ່ຫວັງຜົນຕອບແທນ.

**ມາດຕາ 12 ລະດັບການເຄື່ອນໄຫວຂອງສະມາຄົມ**

ສະມາຄົມ ຖືກຈັດແບ່ງອອກເປັນ 3 ລະດັບ ດັ່ງນີ້:

1. ລະດັບການເຄື່ອນໄຫວໃນຂອບເຂດ ທົ່ວປະເທດ;
2. ລະດັບການເຄື່ອນໄຫວໃນຂອບເຂດ ພາຍໃນແຂວງ ຫຼື ນະຄອນຫຼວງ;
3. ລະດັບການເຄື່ອນໄຫວໃນຂອບເຂດ ພາຍໃນເມືອງ ຫຼື ເທດສະບານ ຫຼື ນະຄອນ ຫຼື ບ້ານ.

**ມາດຕາ 13 ສະມາຄົມເຄື່ອນໄຫວໃນລະດັບຂອບເຂດທົ່ວປະເທດ**

ສະມາຄົມເຄື່ອນໄຫວໃນລະດັບຂອບເຂດທົ່ວປະເທດ ແມ່ນສະມາຄົມທີ່ໄດ້ຮັບອະນຸມັດສ້າງຕັ້ງ ແລະ ເຄື່ອນໄຫວຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ ຫຼື ພາກໃດໜຶ່ງ ຂອງປະເທດ ທີ່ກວມເອົາສອງແຂວງຂຶ້ນໄປ.

**ມາດຕາ 14 ສະມາຄົມເຄື່ອນໄຫວໃນລະດັບຂອບເຂດ ພາຍໃນແຂວງ ຫຼື ນະຄອນຫຼວງ**

ສະມາຄົມເຄື່ອນໄຫວໃນລະດັບຂອບເຂດ ແຂວງ ຫຼື ນະຄອນຫຼວງ ແມ່ນສະມາຄົມ ທີ່ໄດ້ຮັບອະນຸມັດສ້າງຕັ້ງ ແລະ ເຄື່ອນໄຫວສະເພາະ ໃນຂອບເຂດພາຍໃນແຂວງໃດໜຶ່ງ ຫຼື ນະຄອນຫຼວງ.

**ມາດຕາ 15 ສະມາຄົມເຄື່ອນໄຫວໃນລະດັບຂອບເຂດ ພາຍໃນເມືອງ ຫຼື ເທດສະບານ ຫຼື ນະຄອນ ຫຼື ບ້ານ**

ສະມາຄົມເຄື່ອນໄຫວໃນລະດັບຂອບເຂດ ພາຍໃນ ເມືອງ ຫຼື ເທດສະບານ ຫຼື ນະຄອນ ຫຼື ບ້ານ ແມ່ນສະມາຄົມ ທີ່ໄດ້ຮັບອະນຸມັດສ້າງຕັ້ງ ແລະ ເຄື່ອນໄຫວສະເພາະຢູ່ແຕ່ໃນຂອບເຂດ ພາຍໃນເມືອງ ຫຼື ເທດສະບານ ຫຼື ນະຄອນ ຫຼື ບ້ານ ໃດໜຶ່ງເທົ່ານັ້ນ.

## ໝວດທີ 3

## ຂັ້ນຕອນການຂໍອະນຸມັດສ້າງຕັ້ງ, ການຈັດ ແລະ ຕໍ່ທະບຽນສະມາຄົມ

**ມາດຕາ 16 ຂັ້ນຕອນການຂໍອະນຸມັດສ້າງຕັ້ງສະມາຄົມ**

ການສະເໜີ ຂໍອະນຸມັດສ້າງຕັ້ງສະມາຄົມ ຂອງບຸກຄົນ ຫຼື ການຈັດຕັ້ງ ແບ່ງອອກເປັນ 4 ຂັ້ນຕອນ ດັ່ງນີ້:

1. ການສະເໜີ ຮັບຮອງການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ;
2. ການສະເໜີ ຂໍເປີດກອງປະຊຸມສ້າງຕັ້ງສະມາຄົມ;
3. ການສະເໜີ ຂໍຮັບຮອງເອົາ ກົດລະບຽບ ແລະ ຄະນະບໍລິຫານສະມາຄົມ;
4. ການສະເໜີ ຈົດທະບຽນສະມາຄົມ.

**ມາດຕາ 17 ການສະເໜີຮັບຮອງເອົາການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ**

ຜູ້ລິເລີ່ມກໍ່ຕັ້ງສະມາຄົມ ບົ່ງຕົວແຕ່ງຕັ້ງຄະນະຂົນຂວາຍຢ່າງໜ້ອຍສາມຄົນ ແລ້ວປະກອບເອກະສານຄົບຖ້ວນ ດັ່ງລຸ່ມນີ້ ເພື່ອສະເໜີຕໍ່ ອົງການທີ່ມີສິດອະນຸມັດສ້າງຕັ້ງ ຕາມທີ່ໄດ້ກຳນົດໃນ ມາດຕາ 22 ເພື່ອພິຈາລະນາຮັບຮອງ:

1. ໜັງສືສະເໜີ ເພື່ອຮັບຮອງເອົາຄະນະຂົນຂວາຍສ້າງຕັ້ງສະມາຄົມ;

2. ສຳເນົາປື້ມສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ ຂອງແຕ່ລະຄົນ;
3. ຊີວະປະຫວັດຂອງຄະນະຂົນຂວາຍ ທີ່ໄດ້ເຊັນຮັບຮອງຈາກອົງການປົກຄອງບ້ານ;
4. ໃບຢັ້ງຢືນທີ່ຢູ່;
5. ໃບແຈ້ງໂທດ;
6. ໃບຢັ້ງຢືນວິຊາສະເພາະ ຫຼື ໃບຢັ້ງຢືນປະສົບການເຮັດວຽກ ໃນດ້ານໃດໜຶ່ງທີ່ກ່ຽວຂ້ອງກັບຈຸດປະສົງການເຄື່ອນໄຫວຂອງສະມາຄົມ.

**ມາດຕາ 18 ການສະເໜີຂໍອະນຸມັດເປີດກອງປະຊຸມ ສ້າງຕັ້ງສະມາຄົມ**

**1. ການປະກອບເອກະສານສະເໜີ ຂໍອະນຸມັດເປີດກອງປະຊຸມສ້າງຕັ້ງສະມາຄົມ**

ຄະນະຂົນຂວາຍສ້າງຕັ້ງສະມາຄົມ ປະກອບເອກະສານຄົບຖ້ວນແລ້ວ ສະເໜີຕໍ່ອົງການທີ່ມີສິດອະນຸຍາດສ້າງຕັ້ງ ຕາມທີ່ໄດ້ກຳນົດໃນ ມາດຕາ 22 ເພື່ອພິຈາລະນາ ດັ່ງລຸ່ມນີ້:

1.1 ໜັງສືສະເໜີ ຂໍອະນຸມັດເປີດກອງປະຊຸມສ້າງຕັ້ງສະມາຄົມ;
1.2 ຮ່າງກົດລະບຽບຂອງສະມາຄົມ ຕາມແບບຟອມທາງລັດຖະການ;
1.3 ແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານຂອງສະມາຄົມ;
1.4 ບັນຊີລາຍຊື່ຜູ້ສະໝັກເຂົ້າເປັນສະມາຊິກ;
1.5 ໃບຢັ້ງຢືນທີ່ຕັ້ງສຳນັກງານຂອງສະມາຄົມ ທີ່ໄດ້ຮັບການຢັ້ງຢືນຈາກອົງການປົກຄອງບ້ານ ແລະ ແຜນທີ່ໂດຍສັງເຂບຂອງສຳນັກງານສະມາຄົມ.

**2. ການດຳເນີນກອງປະຊຸມສ້າງຕັ້ງສະມາຄົມ**

ຄະນະຂົນຂວາຍສ້າງຕັ້ງສະມາຄົມ ກະກຽມຈັດກອງປະຊຸມສ້າງຕັ້ງສະມາຄົມຂຶ້ນ ພາຍໃນ ເກົ້າສິບວັນ ນັບແຕ່ວັນຂໍ້ຕົກລົງອະນຸມັດເປີດກອງປະຊຸມສ້າງຕັ້ງສະມາຄົມມີຜົນສັກສິດ.

ກອງປະຊຸມສ້າງຕັ້ງສະມາຄົມ ເປີດຂຶ້ນເພື່ອເຕົ້າໂຮມເອົາບັນດາສະມາຊິກທັງໝົດ ຂອງສະມາຄົມ ເພື່ອເຂົ້າຮ່ວມກອງປະຊຸມໃຫຍ່ ສ້າງຕັ້ງສະມາຄົມ ຊຶ່ງມີເນື້ອໃນການດຳເນີນກອງປະຊຸມ ດັ່ງນີ້:

2.1 ອ່ານຂໍ້ຕົກລົງວ່າດ້ວຍ ການອະນຸມັດເປີດກອງປະຊຸມ ສ້າງຕັ້ງສະມາຄົມ;
2.2 ຜ່ານຮ່າງກົດລະບຽບຂອງສະມາຄົມ;
2.3 ມີການຂົນຂວາຍທາບທາມ, ເລືອກຕັ້ງຄະນະບໍລິຫານ, ຄະນະກວດກາ ແລະ ຕຳແໜ່ງອື່ນໆທີ່ຈຳເປັນຂອງສະມາຄົມ;
2.4 ຜ່ານແຜນການເຄື່ອນໄຫວ ຫຼື ແຜນດຳເນີນງານ ຂອງສະມາຄົມ;
2.5 ຜ່ານມະຕິກອງປະຊຸມສ້າງຕັ້ງສະມາຄົມ.

ເມື່ອກອງປະຊຸມສ້າງຕັ້ງສະມາຄົມ ເລືອກຕັ້ງໄດ້ຄະນະບໍລິຫານສະມາຄົມແລ້ວ ຄະນະຂົນຂວາຍສ້າງຕັ້ງສະມາຄົມ ແມ່ນຖືກຍຸບເລີກໄປໃນຕົວ.

ໃນກໍລະນີ ຄະນະຂົນຂວາຍບໍ່ສາມາດເປີດກອງປະຊຸມສ້າງຕັ້ງສະມາຄົມຂຶ້ນໄດ້ ພາຍໃນກຳນົດເວລາເກົ້າສິບວັນ ໃຫ້ຄະນະຂົນຂວາຍສ້າງຕັ້ງສະມາຄົມ ສະເໜີຂໍຂະຫຍາຍເວລາເປີດກອງປະຊຸມອອກໄປຕື່ມພ້ອມທັງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນ ມາຍັງອົງການທີ່ມີສິດອະນຸມັດສ້າງຕັ້ງ ເພື່ອພິຈາລະນາ.

**ມາດຕາ 19 ການສະເໜີຮັບຮອງເອົາ ກົດລະບຽບ ແລະ ຄະນະບໍລິຫານສະມາຄົມ**

ພາຍໃນ ສາມສິບວັນ ນັບແຕ່ວັນສິ້ນສຸດກອງປະຊຸມສ້າງຕັ້ງສະມາຄົມ ຄະນະບໍລິຫານສະມາຄົມ ປະກອບເອກະສານຄົບຖ້ວນ ແລ້ວສະເໜີຕໍ່ອົງການທີ່ມີສິດອະນຸມັດສ້າງຕັ້ງ ຕາມທີ່ໄດ້ກຳນົດໃນ ມາດຕາ 22 ເພື່ອພິຈາລະນາຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານສະມາຄົມ ຊຶ່ງປະກອບມີເອກະສານ ດັ່ງລຸ່ມນີ້:

1. ໜັງສືສະເໜີ ຂໍຮັບຮອງເອົາ ກົດລະບຽບ ແລະ ຄະນະບໍລິຫານສະມາຄົມ;
2. ບົດບັນທຶກ ການຜ່ານຮ່າງກົດລະບຽບ, ການເລືອກຕັ້ງຄະນະບໍລິຫານ ແລະ ຄະນະກວດກາ;
3. ມະຕິກອງປະຊຸມສ້າງຕັ້ງສະມາຄົມ;
4. ຮ່າງກົດລະບຽບສະມາຄົມ ສະບັບທີ່ໄດ້ຜ່ານໃນກອງປະຊຸມສ້າງຕັ້ງສະມາຄົມ;
5. ໃບລົງທະບຽນສະມາຊິກ ຜູ້ເຂົ້າຮ່ວມກອງປະຊຸມ;
6. ບັນຊີລາຍຊື່ສະມາຊິກສະມາຄົມ ສະບັບຫຼ້າສຸດ;
7. ຊີວະປະຫວັດ ຄະນະບໍລິຫານສະມາຄົມ, ໃບຢັ້ງຢືນທີ່ຢູ່, ໃບແຈ້ງໂທດ, ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວ (ກໍລະນີຜູ້ຖືກຄັດເລືອກເປັນຄະນະບໍລິຫານສະມາຄົມ ບໍ່ແມ່ນຄະນະຂັບຂວາຍ ແລະ ຍັງບໍ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນປະຫວັດ ຈາກກະຊວງປ້ອງກັນຄວາມສະຫງົບ);
8. ເອກະສານກ່ຽວກັບທີ່ຕັ້ງສຳນັກງານ ໂດຍໄດ້ຮັບການຢັ້ງຢືນ ຈາກອົງການປົກຄອງບ້ານ ທີ່ສຳນັກງານຕັ້ງຢູ່ ແລະ ແຜນທີ່ໂດຍສັງເຂບ ຂອງສຳນັກງານສະມາຄົມ (ກໍລະນີມີການປ່ຽນແປງ).

**ມາດຕາ 20 ການຈົດທະບຽນສະມາຄົມ**

ເມື່ອສະມາຄົມໄດ້ຮັບການຮັບຮອງ ກົດລະບຽບ ແລະ ຄະນະບໍລິຫານ ຈາກອົງການທີ່ມີສິດອະນຸມັດສ້າງຕັ້ງແລ້ວ, ພາຍໃນ ເຈັດວັນ ສະມາຄົມ ຕ້ອງຂໍຈົດທະບຽນນຳ ກະຊວງພາຍໃນ ຊຶ່ງປະກອບມີເອກະສານ ດັ່ງນີ້:

1. ໜັງສືສະເໜີ ຂໍຈົດທະບຽນ;
2. ກົດລະບຽບຂອງສະມາຄົມ ສະບັບທີ່ໄດ້ຮັບຮອງແລ້ວ;
3. ຂໍ້ຕົກລົງຮັບຮອງ ກົດລະບຽບ ແລະ ຄະນະບໍລິຫານສະມາຄົມ.

ໃບທະບຽນສະມາຄົມ ມີອາຍຸການນຳໃຊ້ ໜຶ່ງປີ ແລະ ສາມາດຕໍ່ອາຍຸໄດ້.

**ມາດຕາ 21 ການຕໍ່ທະບຽນສະມາຄົມ**

ການຕໍ່ທະບຽນສະມາຄົມ ຕ້ອງປະກອບມີເອກະສານ ດັ່ງນີ້:

1. ໜັງສືສະເໜີ ຂໍຕໍ່ທະບຽນ;
2. ໜັງສືຄຳເຫັນ ຈາກກະຊວງ, ອົງການທີ່ອະນຸມັດສ້າງຕັ້ງ;
3. ບົດລາຍງານການເຄື່ອນໄຫວປະຈຳປີ ຂອງສະມາຄົມ;
4. ກົດລະບຽບຂອງສະມາຄົມ ສະບັບທີ່ໄດ້ຮັບຮອງແລ້ວ (ກໍລະນີມີການປ່ຽນແປງ);
5. ຂໍ້ຕົກລົງຮັບຮອງ ກົດລະບຽບ ແລະ ຄະນະບໍລິຫານສະມາຄົມ (ກໍລະນີມີການປ່ຽນແປງ).

## ໝວດທີ 4

## ອົງການທີ່ມີສິດອະນຸມັດ ສ້າງຕັ້ງ, ຈົດທະບຽນ ແລະ ຂັ້ນຕອນການພິຈາລະນາອະນຸມັດ ສ້າງຕັ້ງ, ຈົດທະບຽນສະມາຄົມ

**ມາດຕາ 22 ອົງການທີ່ມີສິດອະນຸມັດ ສ້າງຕັ້ງ ແລະ ຈົດທະບຽນສະມາຄົມ**

ສະມາຄົມເສດຖະກິດ ແມ່ນລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ອະນຸມັດສ້າງຕັ້ງບົນພື້ນຖານ ການປະກອບຄຳເຫັນຂອງກະຊວງ, ຂະແໜງການທີ່ກ່ຽວຂ້ອງ. ຫຼັງຈາກນັ້ນ, ສະເໜີຫາ ກະຊວງພາຍໃນ ເພື່ອຈົດທະບຽນສະມາຄົມ.

ສະມາຄົມວິຊາຊີບ, ເຕັກນິກ-ວິຊາການ ແລະ ປະດິດຄິດແຕ່ງ ກ່ຽວຂ້ອງກັບ ກະຊວງ, ອົງການລັດທຽບເທົ່າກະຊວງໃດ ແມ່ນລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງນັ້ນ ເປັນຜູ້ອະນຸມັດບົນພື້ນຖານການ

ປະກອບຄຳເຫັນ ຂອງກະຊວງ, ຂະແໜງການທີ່ກ່ຽວຂ້ອງ. ຫຼັງຈາກນັ້ນ, ສະເໜີຕໍ່ ກະຊວງພາຍໃນ ເພື່ອຈົດທະບຽນ ສະມາຄົມ.

ສະມາຄົມສັງຄົມສົງເຄາະ ແລະ ພັດທະນາສັງຄົມ ຫຼື ສະມາຄົມທີ່ເຄື່ອນໄຫວກວມເອົາສອງຂະແໜງການຂຶ້ນໄປ ແມ່ນລັດຖະມົນຕີກະຊວງພາຍໃນ ເປັນຜູ້ອະນຸມັດ ແລະ ຈົດທະບຽນ ບົນພື້ນຖານການປະກອບຄຳເຫັນຂອງກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ.

ສະມາຄົມເຄື່ອນໄຫວໄດ້ຢ່າງເປັນທາງການ ນັບແຕ່ວັນທີ່ໄດ້ຮັບການຈົດທະບຽນຢ່າງຖືກຕ້ອງ ຕາມດຳລັດສະບັບນີ້.

**ມາດຕາ 23 ຂັ້ນຕອນການພິຈາລະນາອະນຸມັດສ້າງຕັ້ງສະມາຄົມ**

ການພິຈາລະນາອະນຸມັດສ້າງຕັ້ງສະມາຄົມ ແບ່ງອອກເປັນ 4 ຂັ້ນຕອນ ດັ່ງນີ້:

1. ການພິຈາລະນາຮັບຮອງເອົາ ການແຕ່ງຕັ້ງ ຫຼື ປະຕິເສດການແຕ່ງຕັ້ງ ຄະນະຂົນຂວາຍສ້າງຕັ້ງສະມາຄົມ;
2. ການພິຈາລະນາອະນຸມັດ ເປີດກອງປະຊຸມສ້າງຕັ້ງ ຫຼື ປະຕິເສດການເປີດກອງປະຊຸມສ້າງຕັ້ງ ສະມາຄົມ;
3. ການພິຈາລະນາຮັບຮອງ ຫຼື ປະຕິເສດການຮັບຮອງ ກົດລະບຽບ ແລະ ຄະນະບໍລິຫານ ສະມາຄົມ;
4. ການຈົດທະບຽນສະມາຄົມ.

**ມາດຕາ 24 ການພິຈາລະນາຮັບຮອງເອົາການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ**

ອົງການທີ່ມີສິດອະນຸມັດສ້າງຕັ້ງ ພິຈາລະນາຮັບຮອງເອົາ ຫຼື ປະຕິເສດ ການແຕ່ງຕັ້ງຄະນະຂົນຂວາຍສ້າງຕັ້ງສະມາຄົມ ພາຍໃນກຳນົດເວລາ ຫົກສິບວັນ ພາຍຫຼັງໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໃນ ມາດຕາ 17 ຂອງດຳລັດສະບັບນີ້.

**ມາດຕາ 25 ການພິຈາລະນາອະນຸມັດເປີດກອງປະຊຸມ ສ້າງຕັ້ງສະມາຄົມ**

ອົງການທີ່ມີສິດອະນຸມັດ ສ້າງຕັ້ງສະມາຄົມ ພາຍຫຼັງໄດ້ຮັບເອກະສານ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໃນ ມາດຕາ 18 ຂໍ້ 1 ຂອງດຳລັດສະບັບນີ້ແລ້ວ ຈະຕ້ອງພິຈາລະນາອະນຸມັດເປີດກອງປະຊຸມສ້າງຕັ້ງ ຫຼື ປະຕິເສດການອະນຸມັດ ເປີດກອງປະຊຸມສ້າງຕັ້ງສະມາຄົມ ພາຍໃນກຳນົດເວລາ ສາມສິບວັນ.

ໃນກໍລະນີໄດ້ຮັບການສະເໜີ ເລື່ອນເວລາໃນການເປີດກອງປະຊຸມສ້າງຕັ້ງສະມາຄົມ ຈາກຄະນະຂົນຂວາຍສ້າງຕັ້ງ, ອົງການທີ່ມີສິດອະນຸມັດສ້າງຕັ້ງ ສາມາດພິຈາລະນາເລື່ອນເວລາເປີດກອງປະຊຸມສ້າງຕັ້ງສະມາຄົມອອກໄປຕື່ມໄດ້ ແຕ່ບໍ່ໃຫ້ເກີນ ຫົກສິບວັນ.

**ມາດຕາ 26 ການພິຈາລະນາຮັບຮອງເອົາກົດລະບຽບ ແລະ ຄະນະບໍລິຫານສະມາຄົມ**

ອົງການທີ່ມີສິດອະນຸມັດສ້າງຕັ້ງສະມາຄົມ ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດໃນ ມາດຕາ 19 ຂອງດຳລັດສະບັບນີ້ແລ້ວ ໃຫ້ພິຈາລະນາຮັບຮອງເອົາ ຫຼື ປະຕິເສດການຮັບຮອງ ກົດລະບຽບ ແລະ ຄະນະບໍລິຫານສະມາຄົມ ພາຍໃນກຳນົດເວລາ ຫົກສິບວັນ.

**ມາດຕາ 27 ການພິຈາລະນາຈົດທະບຽນ ແລະ ຕໍ່ທະບຽນສະມາຄົມ**

ກະຊວງພາຍໃນ ເມື່ອໄດ້ຮັບເອກະສານ ຂໍຈົດທະບຽນ ຫຼື ຂໍຕໍ່ທະບຽນ ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 20 ແລະ ມາດຕາ 21 ຂອງດຳລັດສະບັບນີ້ ຕ້ອງພິຈາລະນາຈົດທະບຽນ ຫຼື ຕໍ່ທະບຽນໃຫ້ສະມາຄົມ ພາຍໃນກຳນົດເວລາ ສິບຫ້າວັນ.

## ໝວດທີ 5

## ທີ່ຕັ້ງ, ພາລະບົດບາດ, ສິດ, ໜ້າທີ່, ພັນທະ ແລະ ຂໍ້ຫ້າມສຳລັບສະມາຄົມ

### ມາດຕາ 28 ທີ່ຕັ້ງ ແລະ ພາລະບົດບາດ ຂອງສະມາຄົມ

ສະມາຄົມ ແມ່ນການຈັດຕັ້ງສັງຄົມ, ມີພາລະບົດບາດສຶກສາອົບຮົມ ແລະ ເຕົ້າໂຮມຄວາມສາມັກຄີ, ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ລະຫວ່າງສະມາຊິກ ແລະ ຊ່ວຍເຫຼືອສັງຄົມ ບົນພື້ນຖານກົດໝາຍ ແລະ ລະບຽບການຂອງລັດ; ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຄົມ, ສະມາຊິກສະມາຄົມ ຫຼື ຊຸມຊົນ; ປະກອບສ່ວນສ້າງສາ, ພັດທະນາປະເທດຊາດ ແລະ ລຶບລ້າງຄວາມທຸກຍາກ.

### ມາດຕາ 29 ສິດ ແລະ ໜ້າທີ່ ຂອງສະມາຄົມ

ສະມາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຄື່ອນໄຫວໃຫ້ຖືກຕ້ອງ ຕາມແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ, ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງຕົນ;

2. ປະສານສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ພະແນກການຕ່າງໆ ຂອງແຂວງ, ນະຄອນຫຼວງ, ຫ້ອງການຂອງເມືອງ, ເທດສະບານ, ນະຄອນ ທີ່ພົວພັນກັບຂົງເຂດ ແລະ ຂະແໜງການ ທີ່ສະມາຄົມເຄື່ອນໄຫວ ໃນການຂຶ້ນແຜນ ແລະ ການຈັດຕັ້ງປະຕິບັດວຽກງານຂອງຕົນ ຢູ່ທ້ອງຖິ່ນ;

3. ລະດົມຂົນຂວາຍ ແລະ ຮັບເອົາການສະໜັບສະໜູນ, ຊ່ວຍເຫຼືອ, ການບໍລິຈາກທຶນ ຈາກບຸກຄົນ, ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານກົດໝາຍ ແລະ ລະບຽບການຂອງລັດ;

4. ພິຈາລະນາຮັບເອົາສະມາຊິກໃໝ່ ຫຼື ປົດສະມາຊິກອອກຈາກສະມາຄົມ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດ.

### ມາດຕ 30 ພັນທະຂອງສະມາຄົມ

ສະມາຄົມ ມີພັນທະ ດັ່ງນີ້:

1. ລາຍງານປະຈຳປີ ໃຫ້ອົງການອະນຸມັດສ້າງຕັ້ງ ແລະ ອົງການຈັດຕັ້ງຂອງລັດ ທີ່ກ່ຽວຂ້ອງກ່ຽວກັບສະພາບການຈັດຕັ້ງ, ການເຄື່ອນໄຫວວຽກງານ, ລາຍຮັບ-ລາຍຈ່າຍງົບປະມານ ຂອງຕົນ;

2. ເຄື່ອນໄຫວ ໃນຂົງເຂດ, ຂະແໜງການໃດ ຕ້ອງຢູ່ໃຕ້ການຄຸ້ມຄອງຂອງລັດ ກ່ຽວກັບຂົງເຂດ, ຂະແໜງການນັ້ນ;

3. ລະດົມທຶນ ຫຼື ຮັບເອົາ ການບໍລິຈາກ, ການຊ່ວຍເຫຼືອ ຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ຕ້ອງສອດຄ່ອງກັບ ຈຸດປະສົງຂອງສະມາຄົມ ບົນພື້ນຖານ ກົດໝາຍ ແລະ ລະບຽບການຂອງລັດ;

4. ນຳໃຊ້ທຶນທັງໝົດທີ່ສະມາຄົມ ລະດົມມາໄດ້ໃຫ້ຖືກຕ້ອງ ຕາມຈຸດປະສົງ, ເປົ້າໝາຍຂອງສະມາຄົມ;

5. ປະຕິບັດ ຕາມກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບການບັນຊີ, ການກວດສອບ ແລະ ກົດລະບຽບຂອງສະມາຄົມຢ່າງເຂັ້ມງວດ;

6. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດ.

### ມາດຕາ 31 ຂໍ້ຫ້າມສຳລັບສະມາຄົມ

ຫ້າມສະມາຄົມ ມີການເຄື່ອນໄຫວ ດັ່ງນີ້:

1. ສວຍໃຊ້ສິດເສລີພາບ ໃນການສ້າງຕັ້ງສະມາຄົມ ຫຼື ໃນນາມສະມາຄົມ ເພື່ອເຄື່ອນໄຫວຂັດກັບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ;

2. ສະໜັບສະໜູນ ຫຼື ເຄື່ອນໄຫວທີ່ຈະເປັນອັນຕະລາຍ ຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສິດເສລີພາບຂອງບຸກຄົນອື່ນ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ທ້ອງຖິ່ນ ແລະ ເຜົ່າຕ່າງໆ;

3. ເຄື່ອນໄຫວທີ່ນຳໄປສູ່ການແບ່ງແຍກຄວາມສາມັກຄີ ພາຍໃນຊາດ, ທ້ອງຖິ່ນ, ສາສະໜາ ແລະ ເຜົ່າຕ່າງໆ;

4. ທຳລາຍຜົນປະໂຫຍດ ຂອງຊາດ, ລວມໝູ່ ແລະ ບຸກຄົນ;

5. ປອມແປງ, ມອບໂອນ, ໃຫ້ເຊົ່າ, ໃຫ້ຢືມໃບອະນຸມັດ ສ້າງຕັ້ງ ຫຼື ທະບຽນສະມາຄົມ ດ້ວຍຮູບການໃດກໍຕາມ;

6. ກູ້ຢືມ ຫຼື ໃຫ້ກູ້ຢືມ, ຄ້ຳປະກັນການກູ້ຢືມຕ່າງໆ ຈາກສະຖາບັນການເງິນ, ນິຕິບຸກຄົນ ແລະ ບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ;

7. ຮັບເອົາຊ່ຽວຊານ ແລະ ອາສາສະໝັກຕ່າງປະເທດ ມາເຮັດວຽກປະຈຳຢູ່ນຳສະມາຄົມ.

## ໝວດທີ 6

## ໂຄງປະກອບການຈັດຕັ້ງຂອງສະມາຄົມ

### ມາດຕາ 32 ໂຄງປະກອບກົງຈັກຂອງສະມາຄົມ

ໂຄງປະກອບກົງຈັກຂອງສະມາຄົມ ປະກອບມີ: ຫ້ອງການບໍລິຫານ ຊຶ່ງເປັນກົງຈັກບໍລິຫານປະຈຳການຂອງສະມາຄົມ, ມີພາລະບົດບາດ ຊ່ວຍຄະນະບໍລິຫານສະມາຄົມ ໃນການຄຸ້ມຄອງ, ອຳນວຍຄວບຄຸມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງສະມາຄົມ. ນອກນັ້ນ, ຍັງມີໜ່ວຍງານວິຊາການ ອື່ນໆ ຕາມພາລະບົດບາດ, ໜ້າທີ່ ແລະ ກົດລະບຽບ ຂອງສະມາຄົມກຳນົດ.

### ມາດຕາ 33 ໂຄງປະກອບບຸກຄະລາກອນຂອງສະມາຄົມ

ໂຄງປະກອບບຸກຄະລາກອນຂອງສະມາຄົມ ມີດັ່ງນີ້:

1. ຄະນະບໍລິຫານ (ປະທານ, ຮອງປະທານ ແລະ ກຳມະການ);
2. ຄະນະກວດກາ;
3. ຜູ້ອຳນວຍການ;
4. ສະມາຊິກ;
5. ບຸກຄະລາກອນຕຳແໜ່ງອື່ນ ທີ່ກຳນົດໃນກົດລະບຽບຂອງສະມາຄົມ.

### ມາດຕາ 34 ຄະນະບໍລິຫານສະມາຄົມ

ຄະນະບໍລິຫານສະມາຄົມ ຕ້ອງເປັນສະມາຊິກສາມັນ ຊຶ່ງຖືກເລືອກຕັ້ງໂດຍສະມາຊິກສາມັນ ໃນກອງປະຊຸມໃຫຍ່ຂອງສະມາຄົມ ແລະ ປະກອບມີຢ່າງໜ້ອຍ ສາມຄົນຂຶ້ນໄປ, ມີອາຍຸການສູງສຸດບໍ່ເກີນ ຫ້າປີ, ມີພາລະບົດບາດຊີ້ນຳ, ນຳພາ ທຸກການເຄື່ອນໄຫວ ແລະ ຕົກລົງບັນຫາສຳຄັນ ຂອງສະມາຄົມ.

### ມາດຕາ 35 ຄະນະກວດກາສະມາຄົມ

ຄະນະກວດກາສະມາຄົມ ຕ້ອງເປັນສະມາຊິກສາມັນ ຊຶ່ງຖືກເລືອກຕັ້ງໂດຍສະມາຊິກສາມັນ ໃນກອງປະຊຸມໃຫຍ່ຂອງສະມາຄົມ ແລະ ປະກອບມີຢ່າງໜ້ອຍ ສາມຄົນຂຶ້ນໄປ, ມີອາຍຸການສູງສຸດບໍ່ເກີນ ຫ້າປີ, ມີພາລະບົດບາດຕິດຕາມ

ກວດກາ ທຸກການເຄື່ອນໄຫວຂອງສະມາຄົມ ແລະ ການບໍລິຫານຂອງຄະນະບໍລິຫານ ເພື່ອຮັບປະກັນຄວາມຖືກຕ້ອງ ຕາມກົດລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 36 ຜູ້ອໍານວຍການສະມາຄົມ**

ຜູ້ອໍານວຍການສະມາຄົມ ແມ່ນຜູ້ຊ່ວຍວຽກປະທານສະມາຄົມ ເຊິ່ງໄດ້ຮັບການແຕ່ງຕັ້ງໂດຍ ປະທານສະມາຄົມ ຕາມການຕົກລົງເຫັນດີຂອງຄະນະບໍລິຫານສະມາຄົມ ມີພາລະບົດບາດບໍລິຫານການເຄື່ອນໄຫວວຽກງານປະຈໍາວັນ ຂອງສະມາຄົມ.

## ໝວດທີ 7

## ສະມາຊິກສະມາຄົມ

**ມາດຕາ 37 ສະມາຊິກສະມາຄົມ**

ສະມາຊິກສະມາຄົມ ປະກອບດ້ວຍ:

1. ສະມາຊິກສາມັນ;
2. ສະມາຊິກສະໜັບສະໜູນ;
3. ສະມາຊິກກິດຕິມະສັກ.

**ມາດຕາ 38 ສະມາຊິກສາມັນ**

ສະມາຊິກສາມັນ ແມ່ນການຈັດຕັ້ງ ຫຼື ພົນລະເມືອງລາວ ຜູ້ທີ່ມີຄວາມເຫັນດີເຫັນພ້ອມ ນໍາກົດລະບຽບຂອງ ສະມາຄົມ, ຕື່ນຕົວສະໝັກໃຈເຂົ້າຮ່ວມສະມາຄົມ ແລະ ມີມາດຕະຖານ, ເງື່ອນໄຂຄົບຖ້ວນເປັນສະມາຊິກສາມັນ ຕາມກົດລະບຽບຂອງສະມາຄົມ.

ຂອບເຂດສິດ, ພັນທະຂອງສະມາຊິກສາມັນ, ການພິຈາລະນາຮັບຮອງເອົາ ຫຼື ການປົດສະມາຊິກສາມັນອອກ ຈາກສະມາຄົມ ໃຫ້ປະຕິບັດ ຕາມກົດລະບຽບຂອງສະມາຄົມ.

**ມາດຕາ 39 ສະມາຊິກສະໜັບສະໜູນ**

ສະມາຊິກສະໜັບສະໜູນ ແມ່ນການຈັດຕັ້ງ ຫຼື ພົນລະເມືອງລາວ ທີ່ມີຄວາມເຫັນດີເຫັນພ້ອມນໍາກົດລະບຽບ ຂອງສະມາຄົມ, ມີຄວາມຕື່ນຕົວສະໝັກໃຈເຂົ້າຮ່ວມ, ປະກອບສ່ວນ, ສົມທົບນໍາສະມາຄົມ ແຕ່ບໍ່ທັນມີ ມາດຕະຖານ, ເງື່ອນໄຂຄົບຖ້ວນເປັນສະມາຊິກສາມັນ ຕາມກົດລະບຽບຂອງສະມາຄົມ ຫຼື ຍັງບໍ່ທັນມີຈຸດປະສົງຢາກ ເຂົ້າເປັນສະມາຊິກສາມັນເທື່ອ.

ສະມາຊິກສະໜັບສະໜູນ ມີສິດ ແລະ ພັນທະ ຄືກັນກັບສະມາຊິກສາມັນ ຍົກເວັ້ນສິດ ເລືອກຕັ້ງ, ສະໝັກ ຮັບເລືອກຕັ້ງເຂົ້າໃນຕໍາແໜ່ງ ຄະນະບໍລິຫານ, ຄະນະກວດກາ, ຜູ້ອໍານວຍການ ແລະ ສິດລົງຄະແນນສຽງຕົກລົງກ່ຽວ ກັບບັນຫາຕ່າງໆ ຂອງສະມາຄົມ.

ການພິຈາລະນາຮັບເອົາ ຫຼື ປົດສະມາຊິກສະໜັບສະໜູນອອກຈາກສະມາຄົມ ໃຫ້ປະຕິບັດຕາມກົດລະບຽບ ຂອງສະມາຄົມ.

**ມາດຕາ 40 ສະມາຊິກກິດຕິມະສັກ**

ສະມາຊິກກິດຕິມະສັກ ແມ່ນຜູ້ຕາງໜ້າ ການຈັດຕັ້ງ ຫຼື ພົນລະເມືອງລາວ ຊຶ່ງເປັນຜູ້ທີ່ມີບົດບາດ, ເປັນຜູ້ຊົງຄຸນ ວຸດທິ, ເປັນຜູ້ທີ່ໄດ້ຮັບການເຊື່ອຖືໃນສັງຄົມ, ເຄີຍໄດ້ປະກອບສ່ວນໃຫ້ແກ່ສະມາຄົມ ແລະ ສະມາຄົມໄດ້ເຊີນໃຫ້ເປັນ ສະມາຊິກກິດຕິມະສັກ.

**ມາດຕາ 41 ການໂຄສະນາ ແລະ ຂະຫຍາຍສະມາຊິກສະມາຄົມ**

ການໂຄສະນາຂະຫຍາຍສະມາຊິກຂອງສະມາຄົມ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ອົງການທີ່ມີສິດອະນຸມັດສ້າງຕັ້ງສະມາຄົມ ແລະ ອົງການປົກຄອງທ້ອງຖິ່ນ ຊາບລ່ວງໜ້າກ່ອນຢ່າງໜ້ອຍ ເຈັດວັນ.

## ໝວດທີ 8

## ກອງປະຊຸມຂອງສະມາຄົມ

**ມາດຕາ 42 ປະເພດກອງປະຊຸມຂອງສະມາຄົມ**

ກອງປະຊຸມຂອງສະມາຄົມ ປະກອບມີ:

1. ກອງປະຊຸມໃຫຍ່;
2. ກອງປະຊຸມປະຈໍາປີ;
3. ກອງປະຊຸມຄະນະບໍລິຫານ.

**ມາດຕາ 43 ກອງປະຊຸມໃຫຍ່ຂອງສະມາຄົມ**

ກອງປະຊຸມໃຫຍ່ຂອງສະມາຄົມ ແມ່ນອົງການນໍາພາສູງສຸດຂອງສະມາຄົມ, ເປີດຂຶ້ນຕາມຮູບແບບກອງປະຊຸມໃຫຍ່ທົ່ວສະມາຊິກ ຫຼື ກອງປະຊຸມໃຫຍ່ຕົວແທນສະມາຊິກ ຕາມກົດລະບຽບຂອງສະມາຄົມກໍານົດ.

ກອງປະຊຸມໃຫຍ່ຂອງສະມາຄົມ ເປີດຂຶ້ນຕາມການກໍານົດຂອງກົດລະບຽບຂອງສະມາຄົມ, ແຕ່ບໍ່ໃຫ້ເກີນ ຫ້າປີ ນັບແຕ່ກອງປະຊຸມໃຫຍ່ຄັ້ງກ່ອນສິ້ນສຸດລົງ. ໃນກໍລະນີທີ່ບໍ່ສາມາດເປີດກອງປະຊຸມໃຫຍ່ຂຶ້ນໄດ້ ປະທານສະມາຄົມຕ້ອງສະເໜີເຫດຜົນຢ່າງເປັນລາຍລັກອັກສອນ ເພື່ອຂໍເລື່ອນການເປີດກອງປະຊຸມໃຫຍ່ ໃຫ້ອົງການອະນຸມັດສ້າງຕັ້ງຊາບ.

ສະມາຄົມ ສາມາດເປີດກອງປະຊຸມວິສາມັນຂອງຕົນຂຶ້ນໄດ້ ເມື່ອເຫັນວ່າມີຄວາມຈໍາເປັນ ແລະ ຮີບດ່ວນ ກ່ຽວກັບການເຄື່ອນໄຫວວຽກງານຂອງສະມາຄົມ ຫຼື ເມື່ອມີສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສະມາຊິກສາມັນທັງໝົດ ຫຼື ມີສະມາຊິກໃນຄະນະບໍລິຫານຂອງສະມາຄົມ ຈໍານວນສອງສ່ວນສາມຂຶ້ນໄປ ສະເໜີຂໍໃຫ້ເປີດກອງປະຊຸມວິສາມັນ.

ຫຼັກການ ແລະ ຮູບແບບການລົງຄະແນນສຽງໃນກອງປະຊຸມ ໃຫ້ປະຕິບັດຕາມຫຼັກການສຽງສ່ວນຫຼາຍ.

ກ່ອນເປີດກອງປະຊຸມໃຫຍ່ຂອງສະມາຄົມ ຄະນະບໍລິຫານ ຕ້ອງແຈ້ງເປັນລາຍລັກອັກສອນ ກ່ຽວກັບເນື້ອໃນ ແລະ ບຸກຄະລາກອນຜູ້ທີ່ຈະເປັນປະທານ ຫຼື ຮອງປະທານຄະນະບໍລິຫານ, ກໍາມະການຂອງສະມາຄົມ ໃຫ້ອົງການອະນຸມັດ ສ້າງຕັ້ງຊາບລ່ວງໜ້າ ສາມສິບວັນ ກ່ອນວັນເປີດກອງປະຊຸມໃຫຍ່. ພາຍຫຼັງສິ້ນສຸດກອງປະຊຸມໃຫຍ່ຂອງຕົນແລ້ວ ໃຫ້ລາຍງານຜົນຂອງກອງປະຊຸມ ຕໍ່ອົງການອະນຸມັດສ້າງຕັ້ງ ແລະ ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງ ພາຍໃນ ສາມສິບວັນ.

**ມາດຕາ 44 ກອງປະຊຸມປະຈໍາປີ ຂອງສະມາຄົມ**

ກອງປະຊຸມປະຈໍາປີຂອງສະມາຄົມ ແມ່ນກອງປະຊຸມສະຫຼຸບ ຜົນການເຄື່ອນໄຫວວຽກງານຂອງສະມາຄົມ ໃນໄລຍະໜຶ່ງປີຜ່ານມາ, ຜ່ານທິດທາງແຜນການເຄື່ອນໄຫວ ໃນປີຕໍ່ໄປ, ຍ້ອງຍໍບຸກຄົນດີເດັ່ນໃນການເຄື່ອນໄຫວວຽກງານ ແລະ ບັນຫາອື່ນໆຂອງສະມາຄົມ.

ສະມາຄົມ ຕ້ອງສົ່ງບົດລາຍງານປະຈໍາປີໃຫ້ ອົງການອະນຸມັດສ້າງຕັ້ງ ແລະ ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງ ເພື່ອຊາບ ກ່ອນວັນທີ 15 ທັນວາ ຂອງທຸກປີ.

ລະບຽບ, ການແຈ້ງຂ່າວກອງປະຊຸມ, ການເຂົ້າຮ່ວມກອງປະຊຸມປະຈຳປີ ແມ່ນປະຕິບັດຕາມກົດລະບຽບຂອງສະມາຄົມ.

**ມາດຕາ 45 ກອງປະຊຸມຂອງຄະນະບໍລິຫານສະມາຄົມ**

ກອງປະຊຸມຂອງຄະນະບໍລິຫານສະມາຄົມ ເປີດຂຶ້ນຕາມກົດລະບຽບຂອງສະມາຄົມກຳນົດ ແຕ່ຢ່າງໜ້ອຍຕ້ອງເປີດຂຶ້ນປີລະສອງຄັ້ງ ເພື່ອສະຫຼຸບ, ທົບທວນຄືນການເຄື່ອນໄຫວວຽກງານ ແລະ ສືບຕໍ່ປະຕິບັດວຽກງານໃຫ້ບັນລຸຕາມແຜນການປະຈຳປີວາງໄວ້.

ລະບຽບ, ການແຈ້ງຂ່າວກອງປະຊຸມ, ການເຂົ້າຮ່ວມກອງປະຊຸມຄະນະບໍລິຫານ ແມ່ນປະຕິບັດຕາມ ກົດລະບຽບຂອງສະມາຄົມ.

## ໝວດທີ 9

## ການໂຮມ, ການແຍກ, ການຍຸບເລີກ ແລະ ສ້າງຕັ້ງຫ້ອງການສາຂາສະມາຄົມ

**ມາດຕາ 46 ການໂຮມ**

ການໂຮມສະມາຄົມ ແມ່ນການໂຮມເອົາຫຼາຍສະມາຄົມ ທີ່ເຄື່ອນໄຫວໃນຂົງເຂດ, ຂະແໜງການດຽວກັນ ຫຼື ຂະແໜງການທີ່ແຕກຕ່າງກັນ ເປັນສະມາຄົມດຽວ ບົນພື້ນຖານຄວາມຕື່ນຕົວສະໝັກໃຈ ໂດຍໄດ້ຮັບການເຫັນດີຈາກກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ແລະ ໄດ້ຮັບການອະນຸມັດຈາກອົງການອະນຸມັດສ້າງຕັ້ງ.

**ມາດຕາ 47 ການແຍກ**

ການແຍກສະມາຄົມ ແມ່ນການແຍກສະມາຄົມໜຶ່ງ ອອກເປັນ ສອງ ຫຼື ຫຼາຍສະມາຄົມ ບົນພື້ນຖານຄວາມຕື່ນຕົວສະໝັກໃຈຂອງສະມາຊິກ ໂດຍຜ່ານມະຕິຂອງກອງປະຊຸມສະມາຄົມ ໂດຍໄດ້ຮັບການເຫັນດີຈາກ ກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ແລະ ໄດ້ຮັບການອະນຸມັດຈາກອົງການອະນຸມັດສ້າງຕັ້ງ.

**ມາດຕາ 48 ການຍຸບເລີກ**

ການຍຸບເລີກສະມາຄົມມີ 2 ກໍລະນີ ດັ່ງນີ້:

1. **ການຍຸບເລີກ ໂດຍອົງການທີ່ມີສິດອະນຸມັດສ້າງຕັ້ງ ສັ່ງໃຫ້ຍຸບເລີກ:**
   - 1.1. ສະມາຄົມ ໄດ້ລະເມີດຂໍ້ຫ້າມຕາມ ມາດຕາ 31 ຂອງດຳລັດສະບັບນີ້;
   - 1.2 ສະມາຄົມ ໄດ້ເຄື່ອນໄຫວລະເມີດ ແນວທາງ, ນະໂຍບາຍຂອງພັກ, ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງຕົນ ຢ່າງຮ້າຍແຮງ;
   - 1.3 ສະມາຄົມ ບໍ່ເຄື່ອນໄຫວຕໍ່ເນື່ອງເປັນເວລາຢ່າງໜ້ອຍ ສິບສອງເດືອນຂຶ້ນໄປ ຫຼື ບັນລຸຈຸດປະສົງເຄື່ອນໄຫວແລ້ວ ຫຼື ໝົດກຳນົດເວລາເຄື່ອນໄຫວແລ້ວ ແຕ່ຍັງຝືນເຄື່ອນໄຫວຕໍ່;
   - 1.4 ສະມາຄົມ ບໍ່ມາຂໍຕໍ່ທະບຽນການເຄື່ອນໄຫວ.
2. **ການຍຸບເລີກດ້ວຍຄວາມສະໝັກໃຈ ໂດຍສະມາຄົມເປັນຜູ້ສະເໜີຍຸບເລີກ:**
   - 2.1 ສະມາຊິກສາມັນຂອງສະມາຄົມຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກທັງໝົດ ຮຽກຮ້ອງໃຫ້ຍຸບເລີກ;
   - 2.2 ບໍ່ມີທຶນ ຫຼື ບໍ່ສາມາດສືບຕໍ່ເຄື່ອນໄຫວຕໍ່ໄປ;
   - 2.3 ສະມາຄົມ ໝົດກຳນົດເວລາການເຄື່ອນໄຫວຕາມທີ່ກຳນົດໄວ້ຢູ່ໃນ ກົດລະບຽບຂອງຕົນ;
   - 2.4 ສະມາຄົມ ໄດ້ບັນລຸຈຸດປະສົງທີ່ໄດ້ກຳນົດໄວ້ຢູ່ໃນ ກົດລະບຽບຂອງຕົນ.

**ມາດຕາ 49 ໜ້າທີ່ຂອງສະມາຄົມຕໍ່ການຍຸບເລີກ**

1. **ການຍຸບເລີກ ໂດຍອົງການອະນຸມັດສ້າງຕັ້ງ ສັ່ງໃຫ້ຍຸບເລີກ**

ພາຍຫຼັງ ອົງການອະນຸມັດສ້າງຕັ້ງ ອອກຂໍ້ຕົກລົງໃຫ້ຍຸບເລີກ, ຄະນະບໍລິຫານຂອງສະມາຄົມ ຕ້ອງກະກຽມ ແລະ ຍື່ນເອກະສານ ຕໍ່ອົງການອະນຸມັດສ້າງຕັ້ງ ດັ່ງນີ້:

1.1 ບັນຊີຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍ ແລະ ເງິນຄັງທີ່ຍັງເຫຼືອ;

1.2 ແຜນການຊໍາລະສະສາງແກ້ໄຂໜີ້ສິນ, ແກ້ໄຂຊັບສິນທີ່ຍັງເຫຼືອ;

1.3 ຂໍ້ຕົກລົງຮັບຮອງ ກົດລະບຽບ, ຂໍ້ຕົກລົງຮັບຮອງ ຄະນະບໍລິຫານ ແລະ ທະບຽນ.

2. **ການຍຸບເລີກດ້ວຍຄວາມສະໝັກໃຈ ໂດຍສະມາຄົມ ເປັນຜູ້ສະເໜີຍຸບເລີກ**

ເມື່ອສະມາຄົມ ໄດ້ຕົກລົງສະໝັກໃຈຍຸບເລີກສະມາຄົມຂອງຕົນແລ້ວ, ຄະນະບໍລິຫານຂອງສະມາຄົມ ຕ້ອງກະກຽມ ແລະ ຍື່ນເອກະສານ ຕໍ່ອົງການອະນຸມັດສ້າງຕັ້ງ ດັ່ງນີ້:

2.1 ໃບຄໍາຮ້ອງຂໍອະນຸມັດຍຸບເລີກສະມາຄົມ;

2.2 ມະຕິກອງປະຊຸມ ຫຼື ບົດບັນທຶກກອງປະຊຸມໃຫຍ່ ຕົກລົງຍຸບເລີກ;

2.3 ບັນຊີຊັບສິນ, ໜີ້ສິນ, ລາຍຮັບ-ລາຍຈ່າຍ ແລະ ເງິນຄັງ ທີ່ຍັງເຫຼືອ;

2.4 ແຜນການຊໍາລະສະສາງ ແກ້ໄຂໜີ້ສິນ, ແກ້ໄຂຊັບສິນທີ່ຍັງເຫຼືອ;

2.5 ຂໍ້ຕົກລົງຮັບຮອງ ກົດລະບຽບ, ຂໍ້ຕົກລົງຮັບຮອງ ຄະນະບໍລິຫານ ແລະ ໃບທະບຽນ.

**ມາດຕາ 50 ຊັບສິນຂອງສະມາຄົມພາຍຫຼັງຍຸບເລີກ, ການສິ້ນສຸດໜ້າທີ່ ແລະ ຂອບເຂດສິດຂອງສະມາຄົມ**

ຊັບສິນຂອງສະມາຄົມ ພາຍຫຼັງຍຸບເລີກ ໃຫ້ປະຕິບັດຕາມກົດລະບຽບຂອງຕົນ ຫຼື ໂອນໃຫ້ສະມາຄົມ ຫຼື ມູນນິທິອື່ນ ທີ່ມີຈຸດປະສົງເຄື່ອນໄຫວຄ້າຍຄືກັນ ຫຼື ລັດຮັບເອົາ ເພື່ອຈັດສັນໃຫ້ສະມາຄົມ ຫຼື ມູນນິທິອື່ນ.

ໜ້າທີ່ ແລະ ຂອບເຂດສິດ ຂອງສະມາຄົມ ທີ່ຖືກຍຸບເລີກແລ້ວ ໃຫ້ສິ້ນສຸດລົງ ນັບແຕ່ວັນອົງການທີ່ອະນຸມັດສ້າງຕັ້ງ ໄດ້ຖອນຂໍ້ຕົກລົງຮັບຮອງ ກົດລະບຽບ, ຂໍ້ຕົກລົງຮັບຮອງ ຄະນະບໍລິຫານ ແລະ ໃບທະບຽນຂອງສະມາຄົມ ເປັນຕົ້ນໄປ.

**ມາດຕາ 51 ໜ້າທີ່ຂອງອົງການອະນຸມັດສ້າງຕັ້ງ ຕໍ່ກັບການຍຸບເລີກສະມາຄົມ**

ອົງການອະນຸມັດສ້າງຕັ້ງ ມີໜ້າທີ່ຕໍ່ກັບ ການຍຸບເລີກສະມາຄົມ ດັ່ງນີ້:

1. ອອກຂໍ້ຕົກລົງຍຸບເລີກສະມາຄົມ;
2. ແຈ້ງເປັນລາຍລັກອັກສອນໃຫ້ແກ່ອົງການທີ່ກ່ຽວຂ້ອງ ຮັບຊາບກ່ຽວກັບການຍຸບເລີກ ແລະ ແຈ້ງອົງການຈົດທະບຽນ ເພື່ອລຶບຊື່ອອກຈາກບັນຊີທະບຽນສະມາຄົມ;
3. ຊຸກຍູ້, ຕິດຕາມ ການແກ້ໄຂບັນຫາຊັບສິນ, ໜີ້ສິນຂອງສະມາຄົມ ເພື່ອໃຫ້ຖືກຕ້ອງຕາມ ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;
4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການຂອງລັດກໍານົດ.

**ມາດຕາ 52 ການສ້າງຕັ້ງຫ້ອງການສາຂາ**

ສະມາຄົມ ທີ່ເຄື່ອນໄຫວໃນຂອບເຂດທົ່ວປະເທດ ສາມາດສ້າງຕັ້ງຫ້ອງການສາຂາຂອງຕົນໃນທ້ອງຖິ່ນອື່ນໄດ້ ບົນພື້ນຖານການເຫັນດີຈາກອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ໄດ້ຮັບອະນຸມັດຈາກອົງການອະນຸມັດສ້າງຕັ້ງ.

## ໝວດທີ 10

## ແຫຼ່ງລາຍຮັບ, ການຄຸ້ມຄອງ ແລະການນຳໃຊ້

**ມາດຕາ 53 ແຫຼ່ງລາຍຮັບຂອງສະມາຄົມ**

ລາຍຮັບຂອງສະມາຄົມ ໄດ້ມາຈາກແຫຼ່ງຕ່າງໆ ດັ່ງນີ້:

1. ເງິນບຳລຸງຂອງສະມາຊິກ;
2. ການຮັບທຶນ, ຊັບສິນ ຈາກພາຍໃນປະເທດ ແລະ ຕ່າງປະເທດ;
3. ແຫຼ່ງລາຍຮັບອື່ນໆ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 54 ເງິນບຳລຸງຂອງສະມາຊິກສະມາຄົມ**

ເງິນບຳລຸງສະມາຊິກສະມາຄົມ ແມ່ນເງິນທີ່ສະມາຊິກຕ້ອງຈ່າຍເປັນລາຍເດືອນ ຫຼື ລາຍປີ ໃຫ້ແກ່ສະມາຄົມ ຊຶ່ງສະມາຄົມ ສາມາດກຳນົດຈຳນວນເງິນບຳລຸງສະມາຄົມ ໃນກົດລະບຽບຂອງຕົນໄດ້ ຕາມຄວາມເໝາະສົມ.

**ມາດຕາ 55 ການຮັບເອົາ ທຶນ, ຊັບສິນ ຈາກພາຍໃນ ແລະ ຕ່າງປະເທດ**

ສະມາຄົມ ສາມາດຮັບເອົາ ທຶນ, ຊັບສິນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຂອງ ສປປ ລາວ ໄດ້ ແຕ່ຕ້ອງແມ່ນ ທຶນ, ຊັບສິນ ຊຶ່ງມີທີ່ມາ ຈະແຈ້ງ, ປອດໃສ. ການຮັບທຶນ ຫຼື ຊັບສິນ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ອົງການອະນຸມັດສ້າງຕັ້ງສະມາຄົມຊາບ ພາຍໃນກຳນົດເວລາ ເຈັດວັນ.

ສະມາຄົມ ສາມາດຮັບເອົາ ທຶນ, ຊັບສິນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ຂອງຕ່າງປະເທດໄດ້ ແຕ່ຕ້ອງແມ່ນ ທຶນ, ຊັບສິນ ທີ່ມີທີ່ມາຈະແຈ້ງ, ປອດໃສ ແລະ ຕ້ອງຂໍອະນຸມັດ ຈາກກະຊວງການຕ່າງປະເທດ ຕາມລະບຽບການສະເພາະ ຂອງກະຊວງການຕ່າງປະເທດ ບົນພື້ນຖານຄຳເຫັນ ຂອງອົງການອະນຸມັດສ້າງຕັ້ງ ແລະ ກະຊວງພາຍໃນ.

**ມາດຕາ 56 ການຄຸ້ມຄອງ ແລະ ການນຳໃຊ້ແຫຼ່ງລາຍຮັບ**

ການຄຸ້ມຄອງ ແລະ ການນຳໃຊ້ແຫຼ່ງລາຍຮັບ ຂອງສະມາຄົມ ໃຫ້ປະຕິບັດ ຕາມກົດໝາຍ, ລະບຽບການຂອງລັດທີ່ກ່ຽວຂ້ອງ ແລະ ກົດລະບຽບຂອງສະມາຄົມ ແຕ່ຕ້ອງຮັບປະກັນລວມຍອດລາຍຈ່າຍບໍລິຫານປົກກະຕິ ບໍ່ໃຫ້ເກີນຊາວຫ້າສ່ວນຮ້ອຍ ຂອງແຜນລາຍຈ່າຍປະຈຳປີ.

## ໝວດທີ 11

## ຊັບສິນ ແລະ ການຄຸ້ມຄອງຊັບສິນ ຂອງສະມາຄົມ

**ມາດຕາ 57 ຊັບສິນຂອງສະມາຄົມ**

ຊັບສິນຂອງສະມາຄົມ ແມ່ນ ຕຶກ, ອາຄານ, ທີ່ດິນ, ພາຫະນະ, ອຸປະກອນຮັບໃຊ້ ແລະ ຊັບສິນອື່ນໆ ທີ່ໄດ້ມາຈາກການປະກອບສ່ວນຂອງສະມາຊິກ, ການຊື້, ການບໍລິຈາກ, ການຊ່ວຍເຫຼືອລ້າ ຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ຫຼື ລັດມອບໃຫ້.

**ມາດຕາ 58 ການຄຸ້ມຄອງ ແລະ ການນຳໃຊ້ຊັບສິນ**

ການຄຸ້ມຄອງ ແລະ ນຳໃຊ້ຊັບສິນ ຂອງສະມາຄົມ:

1. ລັດຮັບຮູ້ ແລະ ປົກປ້ອງຊັບສິນຂອງສະມາຄົມ ທີ່ຖືກຕ້ອງຕາມກົດໝາຍ;

2. ການຄຸ້ມຄອງ ແລະ ນຳໃຊ້ຊັບສິນ ແມ່ນໃຫ້ປະຕິບັດຕາມການກຳນົດໃນ ກົດລະບຽບຂອງສະມາຄົມ, ກົດໝາຍ ແລະ ລະບຽບການຂອງລັດ ທີ່ກ່ຽວຂ້ອງ.

## ໝວດທີ 12

## ອົງການຄຸ້ມຄອງສະມາຄົມ

### ມາດຕາ 59 ອົງການຄຸ້ມຄອງສະມາຄົມ

ລັດຖະບານ ເປັນຜູ້ຄຸ້ມຄອງສະມາຄົມ ຢ່າງລວມສູນ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບ ໃຫ້ອົງການລັດ ດັ່ງຕໍ່ໄປນີ້ ເປັນຜູ້ຄຸ້ມຄອງໂດຍກົງ:

1. ກະຊວງ, ຂະແໜງການຕ່າງໆ ທີ່ກ່ຽວຂ້ອງ;
2. ກະຊວງພາຍໃນ;
3. ກະຊວງການເງິນ;
4. ກະຊວງປ້ອງກັນຄວາມສະຫງົບ;
5. ກະຊວງການຕ່າງປະເທດ;
6. ອົງການແນວລາວສ້າງຊາດ;
7. ອົງການປົກຄອງ ແຂວງ, ນະຄອນຫຼວງ;
8. ພະແນກການຕ່າງໆ ຂອງແຂວງ, ນະຄອນຫຼວງ;
9. ພະແນກພາຍໃນແຂວງ, ນະຄອນຫຼວງ;
10. ອົງການປົກຄອງເມືອງ, ເທດສະບານ, ນະຄອນ;
11. ຫ້ອງການຕ່າງໆ ຂອງເມືອງ, ເທດສະບານ, ນະຄອນ;
12. ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ;
13. ອົງການປົກຄອງບ້ານ.

### ມາດຕາ 60 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການລັດທຽບເທົ່າກະຊວງ

ກະຊວງ, ອົງການລັດທຽບເທົ່າກະຊວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ມີຄຳເຫັນ ຫຼື ພິຈາລະນາອະນຸມັດສ້າງຕັ້ງ, ຮັບຮອງເອົາ ການໂຮມ, ການແຍກ ແລະ ການຍຸບເລີກສະມາຄົມ ທີ່ພົວພັນກັບ ຂົງເຂດ, ຂະແໜງການ ທີ່ຕົນຮັບຜິດຊອບຄຸ້ມຄອງ;
2. ປະສານສົມທົບບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພະແນກການຂັ້ນແຂວງທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ຕິດຕາມ, ກວດກາ ການຈັດຕັ້ງ, ການເຄື່ອນໄຫວຂອງສະມາຄົມ ທີ່ເຄື່ອນໄຫວໃນຂົງເຂດຂະແໜງການຂອງຕົນ;
3. ຄົ້ນຄວ້າພິຈາລະນາອະນຸມັດ ແຜນງານ, ໂຄງການ ຂອງສະມາຄົມ ພ້ອມທັງຊຸກຍູ້ໃນການຈັດຕັ້ງປະຕິບັດ;
4. ສົມທົບກັບບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ໃນການຕິດຕາມ ແລະ ຄຸ້ມຄອງແຜນງານ, ໂຄງການ ຂອງສະມາຄົມ;
5. ຄົ້ນຄວ້າ ພິຈາລະນາແກ້ໄຂຄຳສະເໜີຕ່າງໆຂອງສະມາຄົມ ຕາມຂອບເຂດສິດຂອງຕົນ;
6. ໂຄສະນາເຜີຍແຜ່ ບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຂອງຂະແໜງການຕົນ ໃຫ້ແກ່ສະມາຄົມ;
7. ແນະນຳ, ອຳນວຍຄວາມສະດວກ ເພື່ອໃຫ້ສະມາຄົມເຄື່ອນໄຫວຖືກຕ້ອງ ຕາມຈຸດປະສົງ ແລະ ພາລະບົດບາດ ຂອງຕົນ;

8. ຕົກລົງ ຫຼື ສະເໜີ ອົງການທີ່ກ່ຽວຂ້ອງ ຫຼື ລັດຖະບານ ໃຫ້ການຍ້ອງຍໍສະມາຄົມທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ ທີ່ພົວພັນກັບຂະແໜງການຕົນ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 61 ສິດ ແລະ ໜ້າທີ່ ຂອງກະຊວງພາຍໃນ**

ນອກຈາກສິດ ແລະ ໜ້າທີ່ຕ່າງໆ ທີ່ກຳນົດຢູ່ໃນ ມາດຕາ 22, ມາດຕາ 27 ແລະ ມາດຕາ 60 ຂອງດຳລັດສະບັບນີ້ແລ້ວ ກະຊວງພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເສນາທິການ ແລະ ຊ່ວຍລັດຖະບານຄຸ້ມຄອງບໍລິຫານລັດ ກ່ຽວກັບສະມາຄົມຢ່າງລວມສູນເອກະພາບໃນຂອບເຂດທົ່ວປະເທດ;
2. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຮ່າງນະໂຍບາຍຕ່າງໆ, ກົດໝາຍ ແລະ ລະບຽບການຂອງລັດກ່ຽວກັບສະມາຄົມ ເພື່ອສະເໜີຕໍ່ຂັ້ນເທິງພິຈາລະນາຕົກລົງ;
3. ຈົດທະບຽນ ຫຼື ລຶບຊື່ ສະມາຄົມ ອອກຈາກບັນຊີທະບຽນ ພາຍຫຼັງ ກະຊວງ, ຂະແໜງການໄດ້ອະນຸມັດ ຫຼື ຍຸບເລີກແລ້ວ;
4. ພິຈາລະນາປະຕິບັດວິໃນ ຕໍ່ສະມາຄົມ ທີ່ກະຊວງພາຍໃນ ອະນຸມັດ ຫຼື ສະເໜີຫາພາກສ່ວນທີ່ກ່ຽວຂ້ອງໃນກໍລະນີມີການລະເມີດ ກົດໝາຍ, ລະບຽບການຂອງລັດ ແລະ ລະບຽບການຂອງສະມາຄົມ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມ ກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 62 ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ນອກຈາກສິດ ແລະ ໜ້າທີ່ອື່ນ ທີ່ກຳນົດຢູ່ໃນ ມາດຕາ 22 ແລະ ມາດຕາ 60 ຂອງດຳລັດສະບັບນີ້ແລ້ວ, ກະຊວງການເງິນ ມີສິດ ແລະ ໜ້າທີ່ ກ່ຽວກັບການຄຸ້ມຄອງສະມາຄົມ ດັ່ງນີ້:

1. ເປັນເຈົ້າການຄົ້ນຄວ້າອອກລະບຽບການ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ເງິນ ຂອງສະມາຄົມ ແລະ ແນະນຳການຈັດຕັ້ງປະຕິບັດ;
2. ຕິດຕາມ, ກວດກາ ການນຳໃຊ້ເງິນ, ຊັບສິນ ຂອງສະມາຄົມ;
3. ພິຈາລະນາການສະເໜີຂອງສະມາຄົມ ກ່ຽວກັບການຫຼຸດຜ່ອນ ຫຼື ຍົກເວັ້ນ ພາສີ, ອາກອນ ຕາມກົດໝາຍ ແລະ ລະບຽບການຂອງລັດ ກຳນົດໄວ້;
4. ສົມທົບກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂບັນຫາການລ່ວງລະເມີດ ກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບການເງິນ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມ ກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 63 ສິດ ແລະ ໜ້າທີ່ ຂອງກະຊວງປ້ອງກັນຄວາມສະຫງົບ**

ນອກຈາກສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດຢູ່ໃນ ມາດຕາ 22 ແລະ ມາດຕາ 60 ຂອງດຳລັດສະບັບນີ້ແລ້ວ ກະຊວງປ້ອງກັນຄວາມສະຫງົບ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ ແລະ ຢັ້ງຢືນ ຄວາມຖືກຕ້ອງ ກ່ຽວກັບປະຫວັດ ຂອງຜູ້ລິເລີ່ມ, ຄະນະຜູ້ລິເລີ່ມ, ຄະນະຂົນຂວາຍ ສ້າງຕັ້ງສະມາຄົມ ແລະ ຄະນະບໍລິຫານຂອງສະມາຄົມ ພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ວັນທີ່ໄດ້ຮັບໜັງສືສະເໜີ ຈາກກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ;
2. ຕິດຕາມ, ກວດກາ ການເຄື່ອນໄຫວຂອງສະມາຄົມ;
3. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 64 ສິດ ແລະ ໜ້າທີ່ ຂອງກະຊວງການຕ່າງປະເທດ**

ນອກຈາກສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດຢູ່ໃນ ມາດຕາ 22 ແລະ ມາດຕາ 60 ຂອງດໍາລັດສະບັບນີ້ແລ້ວ ກະຊວງການຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາ, ຢັ້ງຢືນ ແລະ ພິຈາລະນາ ກ່ຽວກັບ ການພົວພັນ ແລະ ການຮັບເອົາ ທຶນ, ຊັບສິນ ຈາກຕ່າງປະເທດ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ນິຕິບຸກຄົນ, ສະມາຄົມ, ມູນນິທິ, ກອງທຶນ, ສະຖາບັນ ແລະ ສະໂມສອນຂອງຕ່າງປະເທດ ເພື່ອມາດໍາເນີນ ແຜນງານ, ໂຄງການ ຂອງສະມາຄົມ ພາຍໃນກໍານົດເວລາສາມສິບວັນ ນັບແຕ່ວັນທີ່ໄດ້ຮັບໜັງສືສະເໜີ ຈາກກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ;
2. ສົມທົບກັບ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ ໃນການຕິດຕາມ ແລະ ຄຸ້ມຄອງ ແຜນງານ, ໂຄງການຂອງສະມາຄົມ ທີ່ກະຊວງການຕ່າງປະເທດ ອະນຸມັດຮັບທຶນ;
3. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 65 ສິດ ແລະ ໜ້າທີ່ ຂອງອົງການແນວລາວສ້າງຊາດ**

ອົງການແນວລາວສ້າງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຂົນຂວາຍການຈັດຕັ້ງສັງຄົມ ໃນການປະຕິບັດແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ເຕົ້າໂຮມສະມາຊິກຂອງສະມາຄົມຕ່າງໆ ເພື່ອສ້າງກ້ອນກໍາລັງສາມັກຄີປອງດອງທົ່ວປວງຊົນ ໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ;
2. ເປັນຕົວແທນສ່ອງແສງຄວາມຄິດເຫັນ, ຄວາມມຸ່ງມາດປາຖະໜາ, ຂໍ້ສະເໜີຂອງສະມາຄົມ ແລະ ສະມາຊິກເພື່ອສະເໜີຕໍ່ ອົງການຈັດຕັ້ງທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ແກ້ໄຂ;
3. ເຂົ້າຮ່ວມ ແລະ ປະກອບສ່ວນໃນການສ້າງນະໂຍບາຍ ແລະ ນິຕິກໍາຕ່າງໆກ່ຽວກັບວຽກງານສະມາຄົມ;
4. ເສີມຂະຫຍາຍ ມູນເຊື້ອຮັກຊາດ, ວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງບັນດາອົງການຈັດຕັ້ງ, ສະມາຄົມ ແລະ ສະມາຊິກ ຕາມກົດໝາຍ ແລະ ບຽບການຕ່າງໆທີ່ກ່ຽວຂ້ອງກໍານົດ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 66 ສິດ ແລະ ໜ້າທີ່ ຂອງອົງການປົກຄອງ ແຂວງ, ນະຄອນຫຼວງ**

ອົງການປົກຄອງ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງລວມບັນດາສະມາຄົມ ທີ່ເຄື່ອນໄຫວໃນ ແຂວງ, ນະຄອນຫຼວງ ໂດຍຜ່ານການ ຕິດຕາມ, ກວດກາ ແລະ ລາຍງານຂອງຂະແໜງການທີ່ກ່ຽວຂ້ອງ;
2. ຊີ້ນໍາ, ສຶກສາອົບຮົມໃຫ້ສະມາຄົມຕ່າງໆ ທີ່ເຄື່ອນໄຫວໃນ ແຂວງ, ນະຄອນຫຼວງ ໃຫ້ເຄື່ອນໄຫວຖືກຕ້ອງຕາມກົດໝາຍ, ລະບຽບຂອງລັດ ແລະ ກົດລະບຽບຂອງສະມາຄົມ;
3. ໃຫ້ການຍ້ອງຍໍ ຫຼື ສະເໜີອົງການອະນຸມັດ ສ້າງຕັ້ງໃຫ້ການຍ້ອງຍໍສະມາຄົມ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ ໃນຂົງເຂດທ້ອງຖິ່ນຂອງຕົນ;
4. ສະເໜີ ອົງການອະນຸມັດສ້າງຕັ້ງ ພິຈາລະນາປະຕິບັດວິໄນ ຕໍ່ສະມາຄົມທີ່ລະເມີດ ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;
5. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 67 ສິດ ແລະໜ້າທີ່ຂອງພະແນກການຕ່າງໆ ຂອງແຂວງ, ນະຄອນຫຼວງ**

ພະແນກການຕ່າງໆ ຂອງແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່, ແນະນຳຈັດຕັ້ງປະຕິບັດ ບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການຂອງຂະແໜງການຕົນ ທີ່ກ່ຽວຂ້ອງກັບສະມາຄົມ;
2. ຄົ້ນຄວ້າ, ພິຈາລະນາມີຄຳເຫັນຕໍ່ການຂໍອະນຸມັດການສ້າງຕັ້ງ, ການຮັບຮອງເອົາການໂຮມ, ການແຍກ ແລະ ການຍຸບເລີກສະມາຄົມ ຕາມທີ່ກຳນົດໄວ້ໃນ ມາດຕາ 14 ແລະ 15 ຂອງດຳລັດສະບັບນີ້;
3. ແນະນຳ, ອຳນວຍຄວາມສະດວກ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງສະມາຄົມ ທີ່ເຄື່ອນໄຫວໃນຂະແໜງການຂອງຕົນໃຫ້ມີປະສິດທິຜົນ, ຖືກຕ້ອງຕາມຈຸດປະສົງ ແລະ ພາລະບົດບາດຂອງສະມາຄົມ;
4. ລາຍງານສະພາບການເຄື່ອນໄຫວຂອງສະມາຄົມ ທີ່ເຄື່ອນໄຫວໃນຂະແໜງການຂອງຕົນ ໃຫ້ອົງການປົກຄອງແຂວງ, ນະຄອນຫຼວງ ແລະ ຂັ້ນເທິງຂອງຕົນ ຊາບເປັນປົກກະຕິ ເພື່ອພິຈາລະນາ ແລະ ຊີ້ນຳ;
5. ຄົ້ນຄວ້າພິຈາລະນາແກ້ໄຂຄຳສະເໜີ, ໄກ່ເກ່ຍ ແລະ ແກ້ໄຂຂໍ້ຂັດແຍ່ງຕ່າງໆ ລວມທັງບັນຫາປາກົດການຫຍໍ້ທໍ້ທີ່ເກີດຈາກສະມາຄົມ ທີ່ເຄື່ອນໄຫວໃນຂະແໜງການຕາມຂອບເຂດສິດຂອງຕົນ;
6. ຕີລາຄາການເຄື່ອນໄຫວຂອງບັນດາສະມາຄົມ ແລະ ໃຫ້ການຍ້ອງຍໍ ຫຼື ສະເໜີອົງການທີ່ມີສິດອຳນາດຂອງລັດ ໃຫ້ການຍ້ອງຍໍສະມາຄົມ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມ ທີ່ພົວພັນກັບຂະແໜງການຂອງຕົນ;
7. ສະເໜີ ລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ ຫຼື ອົງການທີ່ມີສິດອຳນາດ ທີ່ກ່ຽວຂ້ອງຂອງແຂວງ, ນະຄອນຫຼວງ ພິຈາລະນາປະຕິບັດມາດຕະການ ຕໍ່ສະມາຄົມ ທີ່ລະເມີດ ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 68 ສິດ ແລະ ໜ້າທີ່ ຂອງພະແນກພາຍໃນ ແຂວງ, ນະຄອນຫຼວງ**

ນອກຈາກສິດທີ່ໄດ້ກຳນົດໃນ ມາດຕາ 67 ຂອງດຳລັດສະບັບນີ້ແລ້ວ ພະແນກພາຍໃນ ແຂວງ, ນະຄອນຫຼວງ ຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່, ແນະນຳ, ຈັດຕັ້ງປະຕິບັດບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດກ່ຽວກັບສະມາຄົມ;
2. ລາຍງານສະພາບການເຄື່ອນໄຫວຂອງສະມາຄົມ ທີ່ກະຊວງພາຍໃນ ອະນຸມັດ ທີ່ເຄື່ອນໄຫວໃນທ້ອງຖິ່ນຂອງຕົນ ໃຫ້ລັດຖະມົນຕີກະຊວງພາຍໃນ, ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງຊາບ ເປັນແຕ່ລະໄລຍະ;
3. ຕີລາຄາການເຄື່ອນໄຫວຂອງບັນດາສະມາຄົມ ແລະ ໃຫ້ການຍ້ອງຍໍ ຫຼື ສະເໜີອົງການທີ່ມີສິດອຳນາດຂອງລັດໃຫ້ການຍ້ອງຍໍສະມາຄົມ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມທີ່ພົວພັນກັບທ້ອງຖິ່ນຂອງຕົນ;
4. ສະເໜີ ລັດຖະມົນຕີກະຊວງພາຍໃນ ຫຼື ອົງການທີ່ມີສິດອຳນາດທີ່ກ່ຽວຂ້ອງ ພິຈາລະນາປະຕິບັດມາດຕະການຕໍ່ສະມາຄົມ ທີ່ກະຊວງພາຍໃນ ອະນຸມັດທີ່ລະເມີດ ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 69 ສິດ ແລະ ໜ້າທີ່ ຂອງອົງການປົກຄອງ ເມືອງ, ເທດສະບານ, ນະຄອນ**

ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງລວມບັນດາສະມາຄົມ ທີ່ເຄື່ອນໄຫວພາຍໃນ ເມືອງ, ເທດສະບານ, ນະຄອນຂອງຕົນ ໂດຍຜ່ານການຕິດຕາມ, ກວດກາ ແລະ ລາຍງານຂອງຫ້ອງການຕ່າງໆ ຂອງເມືອງ, ເທດສະບານ, ນະຄອນ ທີ່ກ່ຽວຂ້ອງ;
2. ຊີ້ນຳ, ສຶກສາອົບຮົມໃຫ້ສະມາຄົມຕ່າງໆ ທີ່ເຄື່ອນໄຫວພາຍໃນ ເມືອງ, ເທດສະບານ, ນະຄອນ ຂອງຕົນໃຫ້ເຄື່ອນໄຫວຖືກຕ້ອງ ຕາມກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;

3. ໃຫ້ການຍ້ອງຍໍ ຫຼື ສະເໜີ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ໃຫ້ການຍ້ອງຍໍສະມາຄົມທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມໃນຂົງເຂດທ້ອງຖິ່ນຂອງຕົນ;
4. ລາຍງານ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອສະເໜີອົງການອະນຸມັດສ້າງຕັ້ງ ພິຈາລະນາປະຕິບັດວິໄນ ຕໍ່ສະມາຄົມທີ່ເຄື່ອນໄຫວພາຍໃນ ເມືອງ, ເທດສະບານ, ນະຄອນຂອງຕົນ ທີ່ລະເມີດ ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 70 ສິດ ແລະ ໜ້າທີ່ ຂອງຫ້ອງການຕ່າງໆ ຂອງເມືອງ, ເທດສະບານ, ນະຄອນ**

ຫ້ອງການຕ່າງໆ ຂອງເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່, ແນະນຳຈັດຕັ້ງປະຕິບັດ ບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການຂອງຂະແໜງການຕົນທີ່ກ່ຽວຂ້ອງກັບສະມາຄົມ;
2. ແນະນຳ, ອຳນວຍຄວາມສະດວກ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງສະມາຄົມ ທີ່ເຄື່ອນໄຫວໃນຂະແໜງການຂອງຕົນ ໃຫ້ມີປະສິດທິຜົນ, ຖືກຕ້ອງຕາມຈຸດປະສົງ ແລະ ພາລະບົດບາດຂອງສະມາຄົມ;
3. ລາຍງານສະພາບການເຄື່ອນໄຫວຂອງສະມາຄົມ ທີ່ເຄື່ອນໄຫວໃນຂະແໜງການຂອງຕົນ ໃຫ້ອົງການປົກຄອງຂັ້ນເມືອງ ແລະ ຂັ້ນເທິງຂອງຕົນ ຊາບເປັນປະຈຳ;
4. ຕີລາຄາການເຄື່ອນໄຫວຂອງບັນດາສະມາຄົມ ແລະ ໃຫ້ການຍ້ອງຍໍ ຫຼື ສະເໜີອົງການທີ່ມີສິດອຳນາດຂອງລັດ ໃຫ້ການຍ້ອງຍໍສະມາຄົມ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນພັດທະນາ ແລະ ຊ່ວຍເຫຼືອສັງຄົມທີ່ພົວພັນກັບຂະແໜງການຂອງຕົນ;
5. ລາຍງານຂັ້ນເທິງຂອງຕົນ ເພື່ອສະເໜີອົງການອະນຸມັດສ້າງຕັ້ງ ພິຈາລະນາປະຕິບັດວິໄນ ຕໍ່ສະມາຄົມທີ່ເຄື່ອນໄຫວພາຍໃນ ເມືອງ, ເທດສະບານ, ນະຄອນ ຂອງຕົນ ທີ່ລະເມີດ ກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ**

ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່, ແນະນຳຈັດຕັ້ງປະຕິບັດ ບັນດານະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດກ່ຽວກັບສະມາຄົມ ໃຫ້ແກ່ບັນດາສະມາຄົມທີ່ເຄື່ອນໄຫວໃນ ເມືອງ ຫຼື ເທດສະບານ ຫຼື ບ້ານ;
2. ຕິດຕາມ, ກວດກາ ແລະ ສະຫຼຸບຕີລາຄາ, ຖອດຖອນບົດຮຽນກ່ຽວກັບ ການຈັດຕັ້ງ, ການເຄື່ອນໄຫວຂອງບັນດາສະມາຄົມ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ຂອງເມືອງ, ເທດສະບານ, ນະຄອນ;
3. ລາຍງານສະພາບການເຄື່ອນໄຫວຂອງສະມາຄົມ ທີ່ເຄື່ອນໄຫວໃນທ້ອງຖິ່ນຂອງຕົນ ໃຫ້ພະແນກພາຍໃນແຂວງ, ນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຊາບເປັນປົກກະຕິ;
4. ລາຍງານພະແນກພາຍໃນ ແຂວງ ຫຼື ນະຄອນຫຼວງ ເພື່ອສະເໜີ ກະຊວງພາຍໃນ ພິຈາລະນາປະຕິບັດວິໄນ ຕໍ່ສະມາຄົມ ທີ່ກະຊວງພາຍ ໃນອະນຸມັດ ທີ່ເຄື່ອນໄຫວໃນ ເມືອງ, ເທດສະບານ, ນະຄອນຂອງຕົນທີ່ລະເມີດກົດໝາຍ, ລະບຽບການຂອງລັດ ແລະ ກົດລະບຽບຂອງສະມາຄົມ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 72 ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ກວດກາ ແລະ ລາຍງານສະພາບການເຄື່ອນໄຫວຂອງສະມາຄົມ ທີ່ໄດ້ປະກອບສ່ວນເຂົ້າໃນການສ້າງສາພັດທະນາບ້ານ ແລະ ຊ່ວຍຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ໃນບ້ານຂອງຕົນ ໃຫ້ເຈົ້າ ເມືອງ, ຫົວໜ້າເທດສະບານ, ເຈົ້າຄອງນະຄອນ ໂດຍຜ່ານ ຫ້ອງການພາຍໃນເມືອງ, ເທດສະບານ, ນະຄອນ ຊາບເປັນປົກກະຕິ;
2. ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກ ໃນການເຄື່ອນໄຫວກິດຈະກຳຂອງສະມາຄົມ;
3. ຢັ້ງຢືນຜົນງານການປະກອບສ່ວນຂອງສະມາຄົມ ເຂົ້າໃນການສ້າງສາພັດທະນາບ້ານ ແລະ ຊ່ວຍຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ໃນບ້ານຂອງຕົນ;
4. ສະຫຼຸບຕີລາຄາ ແລະ ຖອດຖອນບົດຮຽນ ໃນການເຄື່ອນໄຫວ ຂອງສະມາຄົມ;
5. ອອກໃບຢັ້ງຢືນທີ່ຕັ້ງສຳນັກງານຂອງສະມາຄົມ;
6. ເຊັນຢັ້ງຢືນຊີວະປະຫວັດ ຂອງຄະນະຂົນຂວາຍ ແລະ ຄະນະບໍລິຫານສະມາຄົມ;
7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການຂອງລັດ.

**ມາດຕາ 73 ການປະສານງານ**

1. **ການປະສານງານຂັ້ນສູນກາງ**
   - 1.1 ບັນດາກະຊວງ, ຂະແໜງການທີ່ກ່ຽວຂ້ອງ ປະສານສົມທົບກັບກະຊວງພາຍໃນ ໃນການຕິດຕາມ, ກວດກາ ແລະ ປະເມີນຜົນສະມາຄົມ ທີ່ເຄື່ອນໄຫວໃນ ຂົງເຂດ, ຂະແໜງການຕົນ;
   - 1.2 ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ລາຍງານສະພາບການເຄື່ອນໄຫວຂອງສະມາຄົມ ທີ່ເຄື່ອນໄຫວໃນ ຂົງເຂດ, ຂະແໜງການຂອງຕົນ ໃຫ້ນາຍົກລັດຖະມົນຕີ ຊາບເປັນປະຈຳທຸກໆຫົກເດືອນ ໂດຍຜ່ານ ກະຊວງພາຍໃນ;
   - 1.3 ກໍລະນີມີບັນຫາຫຍໍ້ທໍ້ເກີດຂຶ້ນກ່ຽວຂ້ອງກັບສະມາຄົມ ແມ່ນກະຊວງ ຫຼື ອົງການລັດທຽບເທົ່າກະຊວງທີ່ອະນຸມັດສ້າງຕັ້ງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂ ຫຼື ສະເໜີຂັ້ນເທິງ ທີ່ມີສິດອຳນາດແກ້ໄຂ ຕາມກົດໝາຍ ແລະ ລະບຽບການຂອງລັດ;
   - 1.4 ກະຊວງ, ອົງການລັດທຽບເທົ່າກະຊວງ ຈະອະນຸມັດ ສ້າງຕັ້ງ, ໂຮມ, ແຍກ ຫຼື ຍຸບເລີກສະມາຄົມ ທີ່ນອນໃນຄວາມຮັບຜິດຊອບຂອງຕົນ ຕ້ອງມີຄຳເຫັນ ຈາກກະຊວງ, ຂະແໜງການ ທີ່ກ່ຽວຂ້ອງກ່ອນ.
2. **ການປະສານງານຂັ້ນທ້ອງຖິ່ນ**
   - 2.1 ພະແນກການຂັ້ນແຂວງທີ່ກ່ຽວຂ້ອງ ປະສານສົມທົບກັບພະແນກພາຍໃນ ແຂວງ, ນະຄອນຫຼວງ ແລະ ຂະແໜງການ ທີ່ກ່ຽວຂ້ອງ ອຳນວຍຄວາມສະດວກ ແລະ ໃຫ້ຄວາມຮ່ວມມືກັບສະມາຄົມ ໃນການຂຶ້ນແຜນ ແລະ ການຈັດຕັ້ງປະຕິບັດວຽກງານ ຂອງເຂົາເຈົ້າໃນທ້ອງຖິ່ນ; ເອົາໃຈໃສ່ໃນການຕິດຕາມ, ກວດກາ ແລະ ປະເມີນຜົນ ສະມາຄົມທີ່ເຄື່ອນໄຫວໃນຂົງເຂດວຽກງານຂອງຕົນ;
   - 2.2 ກໍລະນີມີບັນຫາຫຍໍ້ທໍ້ເກີດຂຶ້ນຢູ່ທ້ອງຖິ່ນ ກ່ຽວຂ້ອງກັບສະມາຄົມ ແມ່ນພະແນກການທີ່ກ່ຽວຂ້ອງເປັນເຈົ້າການປະສານສົມທົບກັບພະແນກພາຍໃນ ແລະ ຂະແໜງການອື່ນໆ ເພື່ອພິຈາລະນາແກ້ໄຂ ຫຼືສະເໜີຂັ້ນເທິງທີ່ມີສິດອຳນາດແກ້ໄຂຕາມກົດໝາຍ ແລະ ລະບຽບການຂອງລັດ;
   - 2.3 ຫ້ອງການຂັ້ນ ເມືອງ, ເທດສະບານ, ນະຄອນ ທີ່ກ່ຽວຂ້ອງ ປະສານສົມທົບກັບຫ້ອງການພາຍໃນເມືອງ, ເທດສະບານ, ນະຄອນ, ອົງການປົກຄອງບ້ານ ໃນການຕິດຕາມ, ກວດກາການເຄື່ອນໄຫວສະມາຄົມທີ່ ເຄື່ອນໄຫວໃນທ້ອງຖິ່ນຕົນ.

## ໝວດທີ 13

## ອົງການກວດກາສະມາຄົມ

### ມາດຕາ 74 ອົງການກວດກາສະມາຄົມ

ອົງການກວດກາສະມາຄົມ ມີດັ່ງນີ້:

1. ອົງການຄຸ້ມຄອງສະມາຄົມ ຕາມທີ່ໄດ້ກໍານົດໃນ ມາດຕາ 59 ຂອງດໍາລັດສະບັບນີ້;
2. ອົງການກວດສອບແຫ່ງລັດ;
3. ອົງການກວດສອບບັນຊີອິດສະຫຼະ.

### ມາດຕາ 75 ການກວດກາສະມາຄົມ

ອົງການກວດກາສະມາຄົມ ມີໜ້າທີ່ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຄົມ ຕາມຂອບເຂດສິດຂອງຕົນ ດັ່ງນີ້:

1. ກວດກາປະຫວັດຫຍໍ້ ຂອງຜູ້ລິເລີ່ມ, ຄະນະຂົນຂວາຍສ້າງຕັ້ງ ແລະ ຄະນະບໍລິຫານສະມາຄົມ;
2. ກວດກາຈຸດປະສົງ ທີ່ໄດ້ລະບຸໄວ້ ໃນກົດລະບຽບຂອງສະມາຄົມ;
3. ກວດກາບົດລາຍງານປະຈໍາປີ ກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງສະມາຄົມ;
4. ກວດກາບົດລາຍງານປະຈໍາປີ ກ່ຽວກັບ ລາຍຮັບ-ລາຍຈ່າຍການເງິນ ຂອງສະມາຄົມ;
5. ກວດກາປະກົດການລະເມີດ ກົດລະບຽບຂອງສະມາຄົມ, ການລະເມີດກົດໝາຍ ແລະ ລະບຽບການຂອງລັດ.

## ໝວດທີ 14

## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 76 ນະໂຍບາຍຕໍ່ຜູ້ມີຜົນງານ

ສະມາຄົມ, ສະມາຊິກສະມາຄົມ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນສ້າງ ຄຸນປະໂຫຍດ ແລະ ຄຸນງາມຄວາມດີ ໃຫ້ແກ່ສັງຄົມ ແລະ ປະເທດຊາດ ຈະໄດ້ຮັບການຍ້ອງຍໍສັນລະເສີນດ້ວຍຮູບການຕ່າງໆ ຕາມນະໂຍບາຍຂອງລັດ.

### ມາດຕາ 77 ມາດຕະການຕໍ່ຜູ້ລະເມີດ

ສະມາຄົມ, ສະມາຊິກສະມາຄົມ ຫາກໄດ້ລະເມີດດໍາລັດສະບັບນີ້ ຫຼື ກົດໝາຍ ແລະ ລະບຽບການຂອງລັດອື່ນໆ ທີ່ກ່ຽວຂ້ອງ ຈະຖືກກ່າວເຕືອນ, ສັ່ງໂຈະ, ຍຸບເລີກ ຫຼື ດໍາເນີນຄະດີຕາມກົດໝາຍ.

## ໝວດທີ 15

## ສັນຍາລັກ ແລະຕາປະທັບ

### ມາດຕາ 78 ສັນຍາລັກ

ສະມາຄົມ ມີກາໝາຍສັນຍາລັກສະເພາະຂອງຕົນ ຖ້າມີຄວາມຈໍາເປັນ ໂດຍແມ່ນອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ເປັນຜູ້ອະນຸມັດຕາມຂະໜາດ ແລະ ຮູບແບບທີ່ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການຂອງລັດທີ່ກ່ຽວຂ້ອງ.

**ມາດຕາ 79 ຕາປະທັບ**

ສະມາຄົມ ມີຕາປະທັບເປັນຂອງຕົນເອງ ໂດຍແມ່ນອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ ເປັນຜູ້ອະນຸມັດຕາມຂະໜາດ ແລະ ຮູບແບບທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງລັດທີ່ກ່ຽວຂ້ອງ.

## ໝວດທີ 16

## ບົດບັນຍັດສຸດທ້າຍ

**ມາດຕາ 80 ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການຈັດຕັ້ງສັງຄົມພາຍໃນປະເທດ ຈົ່ງຮັບຮູ້ ແລະ ປະຕິບັດຕາມດຳລັດສະບັບນີ້ຢ່າງເຂັ້ມງວດ.

ກະຊວງພາຍໃນ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດ ແລະ ອອກຄຳແນະນຳລະອຽດຕື່ມ ເພື່ອຜັນຂະຫຍາຍເນື້ອໃນດຳລັດສະບັບນີ້.

**ມາດຕາ 81 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງ ເກົ້າສິບວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງລົງໃນ ຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ສຳລັບສະມາຄົມ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຕາມ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 115/ນຍ, ລົງວັນທີ 29 ເມສາ 2009 ແມ່ນໃຫ້ມາຈົດທະບຽນຄືນນຳ ກະຊວງພາຍໃນ ພາຍໃນກຳນົດເວລາ ຫົກສິບວັນ ນັບແຕ່ວັນທີ່ ດຳລັດສະບັບນີ້ ມີຜົນສັກສິດເປັນຕົ້ນໄປ ໂດຍປະກອບເອກະສານຖືກຕ້ອງ ແລະ ຄົບຖ້ວນຕາມເນື້ອໃນ ມາດຕາ 20 ຂອງດຳລັດສະບັບນີ້.

ດຳລັດສະບັບນີ້ ປ່ຽນແທນ ດຳລັດວ່າດ້ວຍ ສະມາຄົມ ສະບັບເລກທີ 115/ນຍ, ລົງວັນທີ 29 ເມສາ 2009. ຂໍ້ກຳນົດ, ກົດລະບຽບໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະບານແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ